ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກີລາ
ກົມອາຊີວະສຶກສາ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໄລຍະ II
SSTVET Project
ADB Grant No. 0503-Lao (SF)

ຄູ່ມືການຈັດຕັ້ງປະຕິບັດ
ການສະໜອງທຶນເບ້ຍລ້ຽງນັກຮຽນພາຍໃຕ້ໂຄງການ SSTVET

ຮັບຮອງໃນເດືອນກັນຍາ 2017

ສາລະບານ

ຕົວຫຍໍ້ທີ່ໃຊ້ໃນຄູ່ມືການຈັດຕັ້ງປະຕິບັດສະບັບນີ້ 1

I. ຄວາມເປັນມາ 2

II. ຈຸດປະສົງ 2

III. ສະຖານອາຊີວະສຶກສາທີ່ຮ່ວມໃນໂຄງການ SSTVET 3

IV. ເກນການຄັດເລືອກນັກຮຽນເບ້ຍລ້ຽງ 4

V. ຄະນະກຳມະການເບ້ຍລ້ຽງ 5

VI. ສິດ, ໜ້າທີ່ ແລະ ຂໍ້ຫ້າມສຳລັບນັກຮຽນເບ້ຍລ້ຽງ 5

VII. ຂັ້ນຕອນການຄັດເລືອກນັກຮຽນເບ້ຍລ້ຽງ 6

VIII. ຂັ້ນຕອນການຈັດຕັ້ງປະຕິບັດ 8

IX. ການຈັດສັນງົບປະມານ 9

X. ການຊຳລະສະສາງ 9

XI. ແຜນການໃຫ້ທຶນເບ້ຍລ້ຽງ 12

XII. ແຜນການຈັດຕັ້ງປະຕິບັດ 13

ລາຍການເອກະສານຊ້ອນທ້າຍ 14

ເອກະສານຊ້ອນທ້າຍ 1: ແຜນວາດສັງລວມຂັ້ນຕອນການຄັດເລືອກນັກຮຽນເບ້ຍລ້ຽງ

ເອກະສານຊ້ອນທ້າຍ 2: ແຜນວາດສັງລວມຂັ້ນຕອນການຈັດຕັ້ງປະຕິບັດ

ເອກະສານຊ້ອນທ້າຍ 3: ແຜນວາດສັງລວມຂັ້ນຕອນການເບີກຈ່າຍເງິນຄ່າທຳນຽມຕ່າງໆໃຫ້ແກ່ສະຖານ ອສ

ເອກະສານຊ້ອນທ້າຍ 4: ແຜນວາດສັງລວມຂັ້ນຕອນການເບີກຈ່າຍເງິນເບ້ຍລ້ຽງນັກຮຽນປະຈຳເດືອນ

ເອກະສານຊ້ອນທ້າຍ 5: ແຜນວາດສັງລວມຮອບວຽນການຄ່ຽນເງິນເບ້ຍລ້ຽງນັກຮຽນ

ເອກະສານຊ້ອນທ້າຍ 6: ລາຍລະອຽດໃນການຄິດໄລ່ອັດຕາທຶນເບ້ຍລ້ຽງ

ເອກະສານຊ້ອນທ້າຍ 7: ລາຍຊື່ 13 ສາຂາທີ່ພັດທະນາໃນໂຄງການ STVET ແລະ ການຈັດແບ່ງທຶນປີ 2017

ເອກະສານຊ້ອນທ້າຍ 8: ຕາຕະລາງສັງລວມສາຂາວິຊາທີ່ກຳນົດໃຫ້ເປັນສາຂາວິຊາຫຼັກໃນແຕ່ລະສະຖານ ອສ

ຕົວຫຍໍ້ທີ່ໃຊ້ໃນຄູ່ມືການຈັດຕັ້ງປະຕິບັດສະບັບນີ້

ຕົວຫຍໍ້	ລາຍລະອຽດ
ໂຄງການ SSTVET	ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໄລຍະທີ II Second Strengthening Technical and Vocational Education and Training Project
ໂຄງການ STVET	ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ ໄລຍະທີ I Strengthening Technical and Vocational Education and Training Project
ສສກ	ສຶກສາທິການ ແລະ ກີລາ
ກົມ ອສ	ກົມອາຊີວະສຶກສາ
ADB	ທະນາຄານພັດທະນາອາຊີ (Asian Development Bank)
ສະຖານ ອສ	ສະຖານອາຊີວະສຶກສາ
PTC	ວິທະຍາໄລເຕັກນິກ ສັບພະວິຊາ (Polytechnic College)
PPTC	ວິທະຍາໄລເຕັກນິກ ປາກປ່າສັກ (Pakpasak Technical College)
VPTC	ວິທະຍາໄລເຕັກນິກ ແຂວງວຽງຈັນ (Technical College of Vientiane Province)
CTVC	ວິທະຍາໄລເຕັກນິກ-ວິຊາຊີບ ແຂວງ ຈຳປາສັກ (Champasak Technical and Vocational College)
KTVC	ວິທະຍາໄລເຕັກນິກ-ວິຊາຊີບ ແຂວງຄຳມ່ວນ (Khammouane Technical and Vocational College)
VHFTVC	ວິທະຍາໄລເຕັກນິກ-ວິຊາຊີບ ມິດຕະພາບ ວຽງຈັນ-ຮ່າໂນ້ຍ (Vientiane-Hanoi Friendship Technical and Vocational College)
STVC	ວິທະຍາໄລເຕັກນິກ-ວິຊາຊີບ ສະຫວັນນະເຂດ (Savannakhet Technical and Vocational College)
DATS	ໂຮງຮຽນເຕັກນິກ-ກະສິກຳ ດົງຄຳຊ້າງ (Dongkhamxang Agriculture Technical School)
C1	ຫຼັກສູດວິຊາຊີບຊັ້ນຕົ້ນລະດັບ 1 (Certificate Level 1)
C2	ຫຼັກສູດວິຊາຊີບຊັ້ນຕົ້ນລະດັບ 2 (Certificate Level 2)
C3	ຫຼັກສູດວິຊາຊີບຊັ້ນຕົ້ນລະດັບ 3 (Certificate Level 3)
Diploma	ຫຼັກສູດວິຊາຊີບຊັ້ນກາງ

I. ຄວາມເປັນມາ

ຜ່ານການຄົ້ນຄວ້າພາຍໃຕ້ໂຄງການ STVET ເຫັນວ່າ ໃນຕະຫຼາດແຮງງານລາວຍັງຂາດແຮງງານທີ່ມີຄວາມຊຳນານງານ ໂດຍສະເພາະ 4 ສາຂາຄື: ກໍ່ສ້າງ, ເຟີນິເຈີ້, ກົນຈັກ ແລະ ລົດຍົນ, ແລະ ການບໍລິຫານທຸລະກິດເບື້ອງຕົ້ນ. ເພື່ອເປັນການຕອບສະໜອງຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ເປັນການພັດທະນາສີມືແຮງງານຂອງຄົນໃນສັງຄົມ ກໍ່ຄືການສ້າງລາຍໄດ້ໃຫ້ຄົນໃນສັງຄົມ, ໂຄງການ STVET ຈຶ່ງໄດ້ສະໜອງບັດທຶນການສຶກສາໃຫ້ແກ່ນັກຮຽນທີ່ສະໝັກເຂົ້າຮຽນທີ່ສະຖານອາຊີວະສຶກສາທີ່ຮ່ວມໃນໂຄງການ ສຳລັບ 4 ສາຂາທີ່ກ່າວມານັ້ນ ໃນຫຼັກສູດວິຊາຊີບຊັ້ນຕົ້ນລະດັບ 3 (C3) ແລະ ຫຼັກສູດວິຊາຊີບຊັ້ນກາງ (Diploma), ໃນຊ່ວງໄລຍະການຈັດຕັ້ງປະຕິບັດໂຄງການ STVET ໄດ້ສະໜອງບັດທຶນທັງໝົດ 5,040 ບັດ ໃນນັ້ນເປັນຍິງ 1,497 ບັດ (29,70%)

ບໍ່ພຽງແຕ່ໂຄງການ STVET ທີ່ເລັງເຫັນຄວາມສຳຄັນຂອງການພັດທະນາສີມືແຮງງານຂອງຄົນໃນສັງຄົມ, ຍັງມີຫຼາຍອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນທີ່ສຸມໃສ່ວຽກງານນີ້, ມັນສະແດງອອກຢູ່ບ່ອນວ່າ ລັດຖະບານກໍ່ໄດ້ມີທຶນອຸດໜູນໃຫ້ແກ່ນັກຮຽນທີ່ສະໝັກເຂົ້າຮຽນໃນສາຂາບູລິມະສິດຂອງລັດຖະບານວາງໄວ້ ແລະ ຍັງມີຜູ້ໃຫ້ທຶນອື່ນໆທີ່ສະໜອງທຶນການສຶກສາໃນຮູບແບບທີ່ແຕກຕ່າງກັນໄປ. ຜ່ານການຖອດຖອນບົດຮຽນຈາກໂຄງການ STVET ແລະ ຈາກໂຄງການທີ່ສະໜັບສະໜຸນຈາກຜູ້ໃຫ້ທຶນອື່ນ ເຫັນໄດ້ວ່າ ບໍ່ພຽງແຕ່ 4 ສາຂາທີ່ກ່າວມາຂ້າງເທິງນັ້ນທີ່ຍັງຂາດແຮງງານທີ່ມີທັກສະສີມື, ແຕ່ຄວາມຕ້ອງການຂອງຕະຫຼາດແຮງຍັງມີສູງໃນເກືອບທຸກສາຂາ ໃນຂະນະທີ່ຈຳນວນແຮງງານລາວທີ່ມີທັກສະສີມືສະເພາະດ້ານຍັງມີຈຳນວນຕ່ຳ

ເພື່ອເປັນການສືບຕໍ່ວຽກງານດັ່ງກ່າວໃຫ້ປະສົບຜົນສຳເລັດຍິ່ງໆຂຶ້ນໄປ ແລະ ເປັນການສ້າງໂອກາດໃຫ້ແກ່ຜູ້ທີ່ທຸກຍາກ ແລະ ດ້ອຍໂອກາດໄດ້ເຂົ້າຮຽນໃນລະດັບວິຊາຊີບ ເພື່ອໃຫ້ເຂົາເຈົ້າສາມາດປະກອບອາຊີບໃດໜຶ່ງທີ່ແນ່ນອນ, ໂຄງການ SSTVET ຈຶ່ງໄດ້ຈັດສັນງົບປະມານເພື່ອສະໜອງທຶນເບ້ຍລ້ຽງໃຫ້ແກ່ກຸ່ມຄົນທີ່ເປັນເປົ້າໝາຍ ໄດ້ເຂົ້າຮຽນໃນລະດັບວິຊາຊີບ, ຊຶ່ງຈະບໍ່ຈຳກັດສະເພາະການໃຫ້ທຶນໃນຫຼັກສູດວິຊາຊີບຊັ້ນຕົ້ນລະດັບ 3 ສຳລັບ 4 ສາຂາເທົ່ານັ້ນ, ແຕ່ຈະສະໜອງທຶນເບ້ຍລ້ຽງໃຫ້ແກ່ນັກຮຽນທີ່ເຂົ້າຮຽນຫຼັກສູດວິຊາຊີບຊັ້ນຕົ້ນລະດັບ 1, 2, 3 (C1, C2, C3) ແລະ ຍັງມີທຶນເບ້ຍລ້ຽງໃຫ້ແກ່ຜູ້ທີ່ສຳເລັດຫຼັກສູດ C3 ແລ້ວຕ້ອງການທີ່ຈະສືບຕໍ່ຮຽນໃນຫຼັກສູດວິຊາຊີບຊັ້ນກາງ (Diploma) ແຕ່ຕ້ອງໄດ້ເລືອກເຟັ້ນ; ສາຂາວິຊາທີ່ຈະສະໜອງທຶນເບ້ຍລ້ຽງ ແມ່ນມີຄວາມຫຼາກຫຼາຍ ແລະ ແທດເໝາະກັບສະພາບຄວາມຕ້ອງການຕົວຈິງຂອງຜູ້ທີ່ຈະເຂົ້າຮຽນ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານຫຼາຍຂຶ້ນກວ່າເກົ່າ. ຈຳນວນທຶນເບ້ຍລ້ຽງເບື້ອງຕົ້ນທີ່ຄາດຄະເນວ່າຈະສະໜອງພາຍໃຕ້ໂຄງການ SSTVET ແມ່ນ 4,900 ທຶນ[1] ໃນນັ້ນຈຳນວນເປົ້າໝາຍຂອງແມ່ຍິງແມ່ນວາງໄວ້ 50% ຫຼື 2,450 ທຶນ

II. ຈຸດປະສົງ

ຈຸດປະສົງຫຼັກໃນການສະໜອງທຶນເບ້ຍລ້ຽງນັກຮຽນພາຍໃຕ້ໂຄງການ SSTVET ມີດັ່ງນີ້:

- ສ້າງເງື່ອນໄຂໃຫ້ຜູ້ທີ່ທຸກຍາກ, ຜູ້ດ້ອຍໂອກາດ, ຜູ້ຍິງ ແລະ ຊົນເຜົ່າ ສາມາດເຂົ້າຮຽນໃນລະດັບວິຊາຊີບ
- ຂະຫຍາຍໂອກາດໃນການປະກອບອາຊີບໃດໜຶ່ງທີ່ແນ່ນອນ
- ສົ່ງເສີມແມ່ຍິງໃຫ້ປະກອບອາຊີບໃນສາຂາວິຊາທີ່ເປີດກວ້າງ
- ຍົກລະດັບທັກສະສີມືຂອງຄົນໃນສັງຄົມເພື່ອຕອບສະໜອງໃຫ້ແກ່ຄວາມຕ້ອງການຂອງຕະຫຼາດແຮງງານ

[1] ເພື່ອເປັນການດຶງດູດແມ່ຍິງ ແລະ ຜູ້ດ້ອຍໂອກາດ ຊຶ່ງແມ່ນກຸ່ມຄົນທີ່ມີແນວໂນ້ມໃນການເຂົ້າຮຽນຫຼັກສູດໄລຍະສັ້ນຕ່ຳກວ່າ 10 ເດືອນ, ໂຄງການໄດ້ເລັງໃສ່ການໃຫ້ທຶນໃນລະດັບ C1 ແລະ C2. ຈຳນວນທຶນ 4,900 ທຶນ ແມ່ນຕົວເລກຄາດຄະເນໃນເບື້ອງຕົ້ນອີງຕາມແຜນການສະໜອງທຶນເບ້ຍລ້ຽງເບື້ອງຕົ້ນ ຊຶ່ງຕົວເລກດັ່ງກ່າວຈະຖືກດັດແກ້ໃຫ້ແທດເໝາະກັບຕົວຈິງຕາມສະຖິຕິການສະໜອງທຶນເບ້ຍລ້ຽງປະຈຳປີໃນໄລຍະການຈັດຕັ້ງປະຕິບັດໃຫ້. ຍິ່ງສະໜອງທຶນສຳລັບຫຼັກສູດໄລຍະສັ້ນລົງ, ຈຳນວນທຶນທີ່ສາມາດສະໜອງກໍ່ຈະຫຼາຍຂຶ້ນ

III. ສະຖານອາຊີວະສຶກສາທີ່ຮ່ວມໃນໂຄງການ SSTVET

- ໂຄງການ SSTVET ຈະສະໜອງທຶນເບ້ຍລ້ຽງໃຫ້ຜູ້ທີ່ສະໝັກເຂົ້າຮຽນໃນຫຼັກສູດທີ່ກຳນົດໄວ້ ທີ່ສະຖານອາຊີວະສຶກສາທີ່ຮ່ວມໃນໂຄງການ ຊຶ່ງລວມມີ 8 ແຫ່ງຄື:
    1. ວິທະຍາໄລເຕັກນິກ ສັບພະວິຊາ, ນະຄອນຫຼວງວຽງຈັນ
    2. ວິທະຍາໄລເຕັກນິກ ປາກປ່າສັກ, ນະຄອນຫຼວງວຽງຈັນ
    3. ວິທະຍາໄລເຕັກນິກ ແຂວງວຽງຈັນ
    4. ວິທະຍາໄລເຕັກນິກ-ວິຊາຊີບ ແຂວງຈຳປາສັກ
    5. ວິທະຍາໄລເຕັກນິກ-ວິຊາຊີບ ແຂວງຄຳມ່ວນ
    6. ວິທະຍາໄລເຕັກນິກ-ວິຊາຊີບ ມິດຕະພາບ ວຽງຈັນ-ຮ່າໂນ້ຍ, ນະຄອນຫຼວງວຽງຈັນ
    7. ວິທະຍາໄລເຕັກນິກ-ວິຊາຊີບ ສະຫວັນນະເຂດ
    8. ໂຮງຮຽນເຕັກນິກກະສິກຳ ດົງຄຳຊ້າງ, ນະຄອນຫຼວງວຽງຈັນ

- ໜ້າທີ່ຂອງສະຖານອາຊີວະສຶກສາທີ່ຮ່ວມໃນໂຄງການ
  ນອກຈາກໜ້າທີ່ຫຼັກໃນວຽກງານວິຊາການຂອງແຕ່ລະສະຖານອາຊີວະສຶກສາແລ້ວ, ສະຖານອາຊີວະສຶກສາທີ່ຮ່ວມໃນໂຄງການ ຍັງຕ້ອງ:
    - ເຜີຍແຜ່ກ່ຽວກັບການໃຫ້ທຶນເບ້ຍລ້ຽງພາຍໃຕ້ໂຄງການ SSTVET
    - ລົງເຮັດວຽກໃນກຸ່ມບ້ານເປົ້າໝາຍເພື່ອຂົນຂວາຍໃຫ້ຜູ້ທີ່ຢູ່ໃນກຸ່ມເປົ້າໝາຍເຂົ້າມາຮຽນວິຊາຊີບ
    - ພັດທະນາຫຼັກສູດ ແລະ ສື່ການສອນຈາກຫຼັກສູດທີ່ມີແລ້ວ ທີ່ຈະນຳໃຊ້ເຂົ້າໃນການສິດສອນລະດັບ C1, C2, C3 ສຳລັບສາຂາວິຊາທີ່ມີຄວາມຕ້ອງການໃນສັງຄົມ
    - ສ້າງແຜນການຮຽນການສອນດ້ວຍຕົນເອງ ແລະ ຈັດຕັ້ງປະຕິບັດການສອນ
    - ແຕ່ງຕັ້ງພະນັກງານວິຊາການຮັບຜິດຊອບວຽກງານເບ້ຍລ້ຽງໂດຍສະເພາະ
    - ປະສານງານກັບອົງການຈັດຕັ້ງທ້ອງຖິ່ນທີ່ກ່ຽວຂ້ອງ
    - ປະສານງານກັບທີມງານເບ້ຍລ້ຽງໂຄງການຢ່າງສະໝ່ຳສະເໝີ ພ້ອມທັງສະໜອງຂໍ້ມູນ ແລະ ເອກະສານການສະໜອງທຶນເບ້ຍລ້ຽງ ທີ່ກ່ຽວກັບ ການຈັດຕັ້ງປະຕິບັດ, ການຕິດຕາມປະເມີນຜົນ, ການລາຍງານ, ແລະ ການເບີກຈ່າຍ
    - ຈັດຫາຫໍພັກໃຫ້ນັກຮຽນເບ້ຍລ້ຽງ
    - ເບິ່ງແຍງ ແລະ ໃຫ້ຄຳປຶກສາແກ່ນັກຮຽນເບ້ຍລ້ຽງ
    - ລາຍງານຜົນການຈັດຕັ້ງປະຕິບັດການໃຫ້ທຶນເບ້ຍລ້ຽງຕໍ່ຄະນະຮັບຜິດຊອບໂຄງການ

- ບົດລາຍງານທີ່ສະຖານອາຊີວະສຶກສາທີ່ຮ່ວມໃນໂຄງການຕ້ອງສົ່ງໃຫ້ຄະນະຮັບຜິດຊອບໂຄງການປະກອບມີ:
    1. ບົດລາຍງານເພື່ອຢັ້ງຢືນການໄດ້ຮັບເງິນຄ່າໃຊ້ຈ່າຍຈາກໂຄງການ SSTVET
       ຊ້າສຸດບໍ່ໃຫ້ກາຍ 1 ອາທິດຫຼັງຈາກໄດ້ຮັບເງິນໂອນຈາກໂຄງການ SSTVET
    2. ສັງລວມລາຍຊື່ນັກຮຽນມີໜ້າ, ອັດຕາການເຂົ້າຮຽນ ແລະ ຜູ້ທີ່ປະລະການຮຽນ
       ສົ່ງໃຫ້ໂຄງການທຸກໆວັນທີ 25 ຂອງແຕ່ລະເດືອນ
    3. ສັງລວມລາຍຊື່ ແລະ ຜົນການຮຽນຂອງນັກຮຽນເບ້ຍລ້ຽງປະຈຳປີ (ການຈົບຊັ້ນ)
       ສົ່ງໃຫ້ໂຄງການທຸກໆທ້າຍສົກປີ (C3)

4. ບົດລາຍງານການສຳເລັດຫຼັກສູດ ພ້ອມທັງສັງລວມສະຖິຕິນັກຮຽນ (ຮຽນຈົບຫຼັກສູດ) ສົ່ງໃຫ້ໂຄງການຫຼັງຈົບແຕ່ລະຫຼັກສູດ (C1 & C2, C3 & Diploma)

IV. ເກນການຄັດເລືອກນັກຮຽນເບ້ຍລ້ຽງ

ຜູ້ທີ່ມີສິດໄດ້ຮັບທຶນເບ້ຍລ້ຽງພາຍໃຕ້ໂຄງການ SSTVET ຕ້ອງມີເງື່ອນໄຂດັ່ງນີ້:

1. ອາຍຸລະຫວ່າງ 15-35 ປີ
2. ບໍ່ແມ່ນຜູ້ທີ່ກຳລັງໄດ້ຮັບທຶນການສຶກສາຈາກລັດຖະບານ ຫຼື ຈາກຜູ້ໃຫ້ທຶນອື່ນ
3. ເປັນຜູ້ທີ່ບໍ່ຫຍຸ້ງກ່ຽວກັບຢາເສບຕິດທຸກປະເພດ (ຢັ້ງຢືນຈາກອຳນາດການປົກຄອງບ້ານ)
4. ເປັນຜູ້ທີ່ນອນຢູ່ໃນກຸ່ມເປົ້າໝາຍ ຊຶ່ງຖືກກຳນົດໃຫ້ເປັນ ຜູ້ດ້ອຍໂອກາດໃນການເຂົ້າຮຽນວິຊາຊີບ ຄື:
   - ຜູ້ທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ ທີ່ຖືກກຳນົດວ່າເປັນຄົນທຸກຍາກ ໂດຍອີງໃສ່ລາຍຮັບສະເລ່ຍຂອງຄອບຄົວຕໍ່ເດືອນ (ການົດລາຍໄດ້ຕໍ່ເດືອນຂອງຄອບຄົວຕ່ຳກວ່າ 180,000ກີບ ສຳລັບຄອບຄົວໃນເຂດຊົນນະບົດ ແລະ ຕ່ຳກວ່າ 240,000ກີບ ສຳລັບຄອບຄົວໃນເຂດຕົວເມືອງ)
   - ຜູ້ທີ່ອາໄສຢູ່ໃນເຂດຊົນນະບົດຫ່າງໄກສອກຫຼີກ
   - ເດັກກ່ຳພ້າ/ກ່ຳພອຍ, ຊົນເຜົ່າ, ແມ່ຍິງ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ
   - ຜູ້ພິການ
   - ຜູ້ທີ່ປະລະການຮຽນ
   - ເງື່ອນໄຂທີ່ກ່າວມາຂ້າງເທິງນີ້ຕ້ອງໄດ້ຮັບການຢັ້ງຢືນຈາກອຳນາດການປົກຄອງບ້ານ
5. ມີວຸດທິການສຶກສາດັ່ງນີ້:
   - ຜູ້ທີ່ຮຽນຈົບການສຶກສາຊັ້ນປະຖົມ
     - ສາມາດເຂົ້າຮຽນໃນ ຫຼັກສູດ C1 ແລະ C2
   - ຜູ້ທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນ
     - ສາມາດເຂົ້າຮຽນໃນ ຫຼັກສູດ C3
6. ສະໝັກເຂົ້າຮຽນໃນສະຖານອາຊີວະສຶກສາໃດໜຶ່ງທີ່ເຂົ້າຮ່ວມໃນໂຄງການ SSTVET
7. ສະໝັກເຂົ້າຮຽນໃນ ຫຼັກສູດ C1, ຫຼື C2, ຫຼື C3 ຫຼື Diploma ໃນສາຂາວິຊາໃດກໍ່ໄດ້ ແຕ່ບໍ່ໃຫ້ທັບຊ້ອນກັບຫຼັກສູດ C1, ຫຼື C2 ທີ່ມີການສະໜອງທຶນຈາກຜູ້ໃຫ້ທຶນອື່ນ ແລະ ຕ້ອງບໍ່ທັບຊ້ອນກັບຫຼັກສູດ Diploma ທີ່ມີການສະໜອງທຶນຈາກລັດຖະບານ. ສະຖານອາຊີວະສຶກສາໃດທີ່ບໍ່ມີການສະໜອງທຶນຈາກຜູ້ໃຫ້ທຶນອື່ນ ຫຼື ມີການໃຫ້ທຶນແຕ່ບາງສາຂາ ແມ່ນສາມາດເປີດຮັບນັກຮຽນເບ້ຍລ້ຽງໃນສາຂາທີ່ບໍ່ມີການສະໜອງທຶນຈາກຜູ້ໃຫ້ທຶນອື່ນ ແລະ ບໍ່ນອນຢູ່ໃນສາຂາວິຊາທີ່ລັດຖະບານສະໜອງທຶນໃຫ້
   - ຫຼັກສູດ C1 ແລະ C2 ແມ່ນເປີດຮັບສະໝັກ ສຳລັບ ທຸກສາຂາວິຊາຍົກເວັ້ນສາຂາວິຊາທີ່ມີການສະໜັບສະໜຸນຈາກຜູ້ໃຫ້ທຶນອື່ນຈຳນວນ 09 ສາຂາວິຊາດັ່ງນີ້:
     - ສະເພາະ C1: ຊ່າງໄມ້, ຊ່າງກໍ່ສ້າງ, ການສ້ອມແປງເຄື່ອງຈັກຂະໜາດນ້ອຍ, ການໂຮງແຮມ, ການປູກຝັງ, ການລ້ຽງສັດ
     - C1 & C2: ການປຸງແຕ່ງອາຫານ, ການຕັດຫຍິບ, ແລະ ການຕິດຕັ້ງໄຟຟ້າ
   - ຫຼັກສູດ C3 ແມ່ນເປີດຮັບສະໝັກສຳລັບທຸກສາຂາວິຊາລວມທັງສາຂາວິຊາທີ່ມີການສະໜັບສະໜຸນຈາກຜູ້ໃຫ້ທຶນອື່ນໃນລະດັບ C1 & C2;
   - ຫຼັກສູດ Diploma ແມ່ນຈະສະໜອງທຶນໃຫ້ສະເພາະນັກສຶກສາທີ່ສຳເລັດຫຼັກສູດ C3 ຊຶ່ງເປັນຜູ້ທີ່ຖືກຄັດເລືອກວ່າເໝາະສົມ;
   - ສາຂາວິຊາທີ່ກຳນົດໃຫ້ເປັນສາຂາວິຊາຫຼັກໃນແຕ່ລະສະຖານອາຊີວະສຶກສາແມ່ນໄດ້ສັງລວມໄວ້ໃນເອກະສານຊ້ອນທ້າຍ 8.

V. ຄະນະກຳມະການເບ້ຍລ້ຽງ

ຄະນະກຳມະການເບ້ຍລ້ຽງແບ່ງອອກເປັນ 2 ພາກສ່ວນຄື: ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ. ນອກຈາກນີ້, ຍັງມີ ອົງການຈັດຕັ້ງຕ່າງໆທີ່ຕ້ອງປະສານສົມທົບຢ່າງໃກ້ຊິດ

- ຄະນະກຳມະການເບ້ຍລ້ຽງຂັ້ນສູນກາງເປັນຜູ້ອະນຸມັດຮັບຮອງໃນການໃຫ້ທຶນເບ້ຍລ້ຽງນັກຮຽນ ປະກອບມີບຸກຄົນ ໂດຍຕຳແໜ່ງດັ່ງນີ້:
    - ລັດຖະມົນຕີກະຊວງສຶກສາທິການ ແລະ ກີລາ
    - ຫົວໜ້າກົມອາຊີວະສຶກສາ, ຫົວໜ້າໂຄງການ SSTVET

- ຄະນະກຳມະການເບ້ຍລ້ຽງຂັ້ນທ້ອງຖິ່ນ ເປັນຜູ້ຄັດເລືອກນັກຮຽນເບ້ຍລ້ຽງແລ້ວສົ່ງໃຫ້ຂັ້ນສູນກາງຮັບຮອງເອົາ. ໃນການຈັດຕັ້ງຄະນະກຳມະການຂັ້ນທ້ອງຖິ່ນ ແມ່ນໃຫ້ສະຖານອາຊີວະສຶກສາເປັນເຈົ້າການໃນການປະສານງານ ແລະ ຈັດຕັ້ງປະຕິບັດ ແລ້ວສົ່ງລາຍຊື່ໃຫ້ທາງຂັ້ນເທິງຮັບຮູ້ ຄະນະກຳມະການຂັ້ນທ້ອງຖິ່ນ ປະກອບມີບຸກຄົນໂດຍ ຕຳແໜ່ງດັ່ງນີ້:

○ ຜູ້ອຳນວຍການສະຖານອາຊີວະສຶກສາ	ເປັນປະທານ
○ ຫົວໜ້າຫ້ອງການສຶກສາເມືອງ	ເປັນຮອງປະທານ
○ ຫົວໜ້າຂະແໜງອາຊີວະສຶກ, ພະແນກ ສສກ ແຂວງ/ນະຄອນຫຼວງ	ເປັນຄະນະ
○ ຮອງຜູ້ອຳນວຍການສະຖານອາຊີວະສຶກສາ	ເປັນຄະນະ
○ ຕາງໜ້າພາກວິຊາທີ່ກ່ຽວຂ້ອງ	ເປັນຄະນະ
○ ຕາງໜ້າພະແນກຄຸ້ມຄອງວິຊາການ	ເປັນຄະນະ
○ ຕາງໜ້າພະແນກກິດຈະກຳນັກສຶກສາ	ເປັນຄະນະ
○ ຕາງໜ້າພະແນກຂໍ້ມູນຂ່າວສານ	ເປັນຄະນະ

- ຫົວໜ້າພະແນກ ສສກ ແຂວງ/ນະຄອນຫຼວງ ເປັນຜູ້ອອກຂໍ້ຕົກລົງແຕ່ງຕັ້ງຄະນະກຳມະການ

- ພາກສ່ວນທີ່ກ່ຽວຂ້ອງໃນການປະສານສົມທົບລວມມີ:
    - ອົງການຈັດຕັ້ງມະຫາຊົນຂັ້ນແຂວງ
    - ຫ້ອງການປົກຄອງເມືອງ
    - ນາຍບ້ານ

- ການຄັດເລືອກນັກຮຽນເບ້ຍລ້ຽງຈະດຳເນີນໃນຂັ້ນທ້ອງຖິ່ນໂດຍມີຄະນະກຳມະການຂັ້ນທ້ອງຖິ່ນເປັນຜູ້ຄັດເລືອກ, ນັກຮຽນສາມາດມາສະໝັກໄດ້ທີ່ສະຖານອາຊີວະສຶກສາໂດຍກົງ, ຫຼື ສະໝັກໃນຊ່ວງການດຳເນີນກິດຈະກຳການ ສົ່ງເສີມອາຊີວະສຶກສາ ແລະ ອົບຮົມວິຊາຊີ ຫຼື ກິດຈະກຳເພື່ອສັງຄົມອື່ນໆທີ່ສະຖານອາຊີວະສຶກສາເປັນຜູ້ຈັດຕັ້ງ ປະຕິບັດໂດຍສະເພາະແມ່ນການແນະແນວວິຊາຊີບ.

VI. ສິດ, ໜ້າທີ່ ແລະ ຂໍ້ຫ້າມສຳລັບນັກຮຽນເບ້ຍລ້ຽງ

1. ສິດຂອງນັກຮຽນເບ້ຍລ້ຽງ:
    - ນັກຮຽນເບ້ຍລ້ຽງຈະໄດ້ເຂົ້າຮຽນໃນສະຖານອາຊີວະສຶກສາທີ່ຮ່ວມໃນໂຄງການ SSTVET
    - ນັກຮຽນເບ້ຍລ້ຽງມີສິດທີ່ຈະໄດ້ເຂົ້າພັກໃນຫໍພັກນັກສຶກສາຂອງສະຖານອາຊີວະສຶກສາທີ່ຕົນຈະເຂົ້າຮຽນ ໂດຍທີ່ຈະບໍ່ຖືກຮຽກເກັບຄ່າບຳລຸງຮັກສາຫໍພັກເພີ້ມຕື່ມ
    - ນັກຮຽນເບ້ຍລ້ຽງຈະໄດ້ຮັບເງິນເບ້ຍລ້ຽງປະຈຳເດືອນ
    - ນັກຮຽນເບ້ຍລ້ຽງຈະໄດ້ຮັບເງິນຄ່າເດີນທາງ

- ເງິນເບ້ຍລ້ຽງ ແລະ ເງິນຄ່າເດີນທາງຈະຖືກໂອນຜ່ານທະນາຄານໃຫ້ນັກຮຽນເບ້ຍລ້ຽງໂດຍກົງ, ໂຄງການ SSTVET ຈະອອກບັດກົດເງິນໃຫ້, ແຕ່ຖ້າຫາກນັກຮຽນເຮັດບັດສູນຫາຍ ຫຼື ລືມລະຫັດກົດເງິນ ນັກຮຽນຈະຕ້ອງຮັບຜິດຊອບຄ່າທຳນຽມໃນການອອກບັດໃໝ່ ຫຼື ຄ່າທຳນຽມອອກລະຫັດໃໝ່
- ນັກຮຽນເບ້ຍລ້ຽງແມ່ນຈະບໍ່ໄດ້ຈ່າຍຄ່າທຳນຽມຕ່າງໆທີ່ຕິດພັນກັບຫຼັກສູດການຮຽນ
- ນັກຮຽນເບ້ຍລ້ຽງຈະໄດ້ຮັບຊຸດເຄື່ອງແບບ ຫຼື ຊຸດປະຕິບັດງານ ຈາກສະຖານອາຊີວະສຶກສາທີ່ເຂົ້າຮຽນ ໂດຍທີ່ຈະບໍ່ຖືກຮຽກເກັບຄ່າໃຊ້ຈ່າຍເພີ້ມຕື່ມ
- ນັກຮຽນເບ້ຍລ້ຽງມີສິດໄດ້ຮັບຄຳປຶກສາຈາກສະຖານອາຊີວະສຶກສາທີ່ຮັບຜິດຊອບ ທາງດ້ານການຮຽນ, ບົດບາດຍິງຊາຍ, ສຸຂະພາບຮ່າງກາຍ ແລະ ສະພາບຈິດໃຈ
- ໃນກໍລະນີທີ່ມີຂໍ້ສົນໃຈກ່ຽວກັບການສະໜອງທຶນເບ້ຍລ້ຽງ, ຫຼືຢາກມີຄຳເຫັນ ຫຼືສະເໜີກ່ຽວກັບສະຖານອາຊີວະສຶກສາທີ່ຮັບຜິດຊອບ, ນັກຮຽນສາມາດພົວພັນ ຫຼືສົ່ງເລື່ອງຫາທີມງານເບ້ຍລ້ຽງໂຄງການໂດຍກົງເພື່ອລາຍງານໃຫ້ຂັ້ນກົມຕັດສິນບັນຫາ ຫຼື ຂັ້ນກະຊວງຖ້າຫາກບັນຫາດັ່ງກ່າວບໍ່ສາມາດແກ້ໄຂໄດ້ໃນຂັ້ນທີ່ກ່າວມາ

2. ໜ້າທີ່ຂອງນັກຮຽນເບ້ຍລ້ຽງ
   - ປະຕິບັດຕາມກົດລະບຽບຂອງສະຖານອາຊີວະສຶກສາກຳນົດໄວ້
   - ເມື່ອສຳເລັດຫຼັກສູດແລ້ວ ນັກຮຽນຕ້ອງຊອກຫາວຽກເຮັດ ຫຼື ປະກອບອາຊີບໃດໜຶ່ງຕາມຄວາມອາດສາມາດຂອງຕົນ, ແລະ ຍັງສືບຕໍ່ຕິດຕໍ່ກັບສະຖານອາຊີວະສຶກສາ ເພື່ອສະໜອງຂໍ້ມູນທີ່ສະຖານອາຊີວະສຶກສາ ແລະ ໂຄງການ SSTVET ຕ້ອງການ

3. ຂໍ້ຫ້າມສຳລັບນັກຮຽນເບ້ຍລ້ຽງ
   - ຫ້າມລະເມີດລະບຽບວິໄນຂອງສະຖານອາຊີວະສຶກສາ ແລະ ຫ້ອງໜ່ວຍແຮງງານ
   - ຫ້າມພົວພັນກັບສິ່ງມຶນເມົາ, ສິ່ງລາມົກ ອະນາຈານ, ສິ່ງເສບຕິດທຸກປະເພດ ແລະ ຫຼິ້ນການພະນັນທີ່ຕ້ອງຫ້າມພາຍໃນສະຖານອາຊີວະສຶກສາ
   - ຫ້າມໃຫ້ສິນບົນແກ່ຜູ້ບໍລິຫານ, ນັກວິຊາການ ແລະ ຄູສອນວິຊາຊີບ
   - ຫ້າມປະພຶດຫຍາບຄາຍ, ບໍ່ສຸພາບ ຕໍ່ ຜູ້ບໍລິຫານ, ນັກວິຊາການ ແລະ ຄູສອນວິຊາຊີບ
   - ຫ້າມສ້າງກຸ່ມກ້ອນເພື່ອກໍ່ຄວາມວຸ້ນວາຍພາຍໃນສະຖານອາຊີວະສຶກສາ
   - ຫ້າມມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບກົດໝາຍ

VII. ຂັ້ນຕອນການຄັດເລືອກນັກຮຽນເບ້ຍລ້ຽງ

ການຄັດເລືອກນັກຮຽນເບ້ຍລ້ຽງແບ່ງອອກເປັນ 10 ຂັ້ນຕອນຫຼັກ, ໃນເວລາຈັດຕັ້ງປະຕິບັດຕົວຈິງ ອາດຈະມີການເພີ້ມ ຫຼື ຕັດບາງຂັ້ນຕອນອອກຕາມຄວາມເໝາະສົມ, ຂັ້ນຕອນໃນການຄັກເລືອກນັກຮຽນເບ້ຍລ້ຽງມີຄື:

1. ການເຊັນບົດບັນທຶກກ່ຽວກັບການຈັດຕັ້ງປະຕິບັດກິດຈະກຳເບ້ຍລ້ຽງພາຍໃຕ້ໂຄງການ SSTVET (MOA)
2. ສຳມະນາ/ຝຶກອົບຮົມ
   - ກ່ອນຈະຈັດຕັ້ງປະຕິບັດ ທີມງານເບ້ຍລ້ຽງໂຄງການ SSTVET ຈະເປີດສຳມະນາ ຫຼື ຝຶກອົບຮົມ ກ່ຽວກັບຂັ້ນຕອນການຈັດຕັ້ງປະຕິບັດ ແລະ ການປະກອບເອກະສານແຕ່ລະຂັ້ນຕອນ ໃຫ້ແກ່ພະນັກງານວິຊາການຂອງສະຖານອາຊີວະສຶກສາ ທີ່ຖືກແຕ່ງຕັ້ງໃຫ້ຮັບຜິດຊອບວຽກງານເບ້ຍລ້ຽງ
3. ການເຜີຍແຜ່
   - ຕ້ອງມີການໂຄສະນາ ເຜີຍແຜ່ກ່ຽວກັບການສະໜອງທຶນເບ້ຍລ້ຽງພາຍໃຕ້ໂຄງການ SSTVET ຢ່າງເປີດກວ້າງ ໃນຂັ້ນກະຊວງ/ໂຄງການ ແລະ ຂັ້ນສະຖານອາຊີວະສຶກສາ/ທ້ອງຖິ່ນ ເພື່ອເປັນການປຸກລະດົມ ຂົນຂວາຍໃຫ້ຜູ້ທີ່ເປັນເປົ້າໝາຍເຂົ້າມາຮຽນວິຊາຊີບ
   - ການໂຄສະນາເຜີຍແຜ່ຂັ້ນກະຊວງ/ໂຄງການ ກໍ່ຄື ການສອດແຊກຂໍ້ມູນກ່ຽວກັບການໃຫ້ທຶນເບ້ຍລ້ຽງພາຍໃຕ້

ໂຄງການ SSTVET ເຂົ້າໃນກິດຈະກຳການລົງແນະແນວວິຊາຊີບຂອງກົມກອງທີ່ກ່ຽວຂອງ ແລະ ກິດຈະກຳການລົງໂຄສະນາເຜີຍແຜ່ການຕະຫຼາດທາງສັງຄົມພາຍໃຕ້ໂຄງການ SSTVET

- ການໂຄສະນາເຜີຍແຜ່ຂັ້ນສະຖານອາຊີວະສຶກສາ/ຂັ້ນທ້ອງຖິ່ນ ກໍ່ຄື ການສອດແຊກຂໍ້ມູນກ່ຽວກັບການໃຫ້ທຶນເບ້ຍລ້ຽງພາຍໃຕ້ໂຄງການ SSTVET ເຂົ້າໃນກິດຈະກຳການລົງແນະແນວວິຊາຊີບຂອງສະຖານອາຊີວະສຶກສາ ແລະ ກິດຈະກຳອື່ນໆທີ່ໃກ້ຊິດຕິດແທດກັບທ້ອງຖິ່ນ

4. ການກຳນົດບ້ານເປົ້າໝາຍ ແລະ ການລາຍງານກ່ຽວກັບບ້ານເປົ້າໝາຍ
   - ສະຖານອາຊີວະສຶກສາຕ້ອງປະສານງານກັບການຈັດຕັ້ງທີ່ກ່ຽວຂ້ອງເພື່ອກຳນົດບ້ານເປົ້າໝາຍ
   - ບ້ານເປົ້າໝາຍແມ່ນບ້ານທີ່ຄົນໃນບ້ານນອນໃນກຸ່ມເປົ້າໝາຍໃນການຮັບທຶນເບ້ຍລ້ຽງ ອາດຈະແມ່ນບ້ານທີ່ກຳນົດເປັນບ້ານທີ່ທຸກຍາກທີ່ສຸດໃນຕົວເມືອງ, ບ້ານທີ່ຢູ່ໃນເຂດຫ່າງໄກສອກຫຼີກ, ບ້ານທີ່ມີຜູ້ດ້ອຍໂອກາດໃນການເຂົ້າຮຽນວິຊາຊີບ, ຫຼື ບ້ານທີ່ນອນໃນເງື່ອນໄຂອື່ນໆທີ່ເຫັນວ່າເໝາະສົມ
   - ການກຳນົດບ້ານເປົ້າໝາຍ ແມ່ນບໍ່ຈຳກັດສະເພາະໃນແຂວງຂອງຕົນ ແຕ່ສາມາດກຳນົດບ້ານໃດກໍ່ໄດ້ໃນຂອບເຂດທົ່ວປະເທດ ບົນພື້ນຖານຄວາມອາດສາມາດໃນລົງເຮັດວຽກຕົວຈິງຢູ່ພື້ນທີ່
   - ສະຖານອາຊີວະສຶກສາຕ້ອງເຮັດບົດລາຍງານກ່ຽວກັບການກຳນົດບ້ານເປົ້າໝາຍ ພ້ອມທັງຄັດຕິດແຜນລົງເຮັດວຽກໃນພື້ນທີ່ ສົ່ງໃຫ້ຄະນະຮັບຜິດຊອບໂຄງການພິຈາລະນາລ່ວງໜ້າ 2 ເດືອນກ່ອນຈະລົງເຮັດວຽກຕົວຈິງ
5. ການທົບທວນບ້ານເປົ້າໝາຍ, ການໃຫ້ທິດຊີ້ນຳເພື່ອລົງເຜີຍແຜ່ ແລະ ສຳຫຼວດພື້ນທີ່
   - ຄະນະຮັບຜິດຊອບໂຄງການຈະທົບທວນບ້ານເປົ້າໝາຍທີ່ສະຖານອາຊີວະສຶກສາສະເໜີມາ ແລ້ວແຈ້ງຄືນໃຫ້ສະຖານອາຊີວະສຶກສາຮັບຮູ້ກ່ຽວກັບທິດຊີ້ນຳເພື່ອຈັດຕັ້ງປະຕິບັດ
6. ການລົງເຮັດວຽກໃນພື້ນທີ່
   - ການລົງເຮັດວຽກໃນພື້ນທີ່ ກໍ່ຄືການລົງເຜີຍແຜ່ ແລະ ແນະແນວໃນບ້ານເປົ້າໝາຍ ໂດຍມີສະຖານອາຊີວະສຶກສາທີ່ກ່ຽວຂ້ອງເປັນເຈົ້າການ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ
   - ໃນເວລາທີ່ລົງເຮັດວຽກໃນພື້ນທີ່, ສະຖານອາຊີວະສຶກສາຕ້ອງກະກຽມແບບຟອມສະໝັກເພື່ອຮັບທຶນເບ້ຍລ້ຽງ ແລະ ເອກະສານທີ່ກ່ຽວຂ້ອງໄປພ້ອມ ເພື່ອໃຫ້ຜູ້ທີ່ສົນໃຈໄດ້ປະກອບເອກະສານໃນເວລາທີ່ລົງເຮັດວຽກໃນພື້ນທີ່ ແລ້ວເກັບກຳເອົາເອກະສານດັ່ງກ່າວຄືນມາພ້ອມ
   - ພາຍຫຼັງທີ່ໄດ້ຮັບທິດຊີ້ນຳຈາກຄະນະຮັບຜິດຊອບໂຄງການ, ສະຖານອາຊີວະສຶກສາຕ້ອງຂຶ້ນແຜນງົບປະມານໃນການລົງເຮັດວຽກໃນພື້ນທີ່ແລ້ວສົ່ງໃຫ້ຄະນະຮັບຜິດຊອບໂຄງການ ພາຍໃນ 2 ເດືອນ ກ່ອນຈະລົງເຮັດວຽກຕົວຈິງ ຊຶ່ງປະກອບມີ:
     - ໜັງສືສະເໜີ
     - ແຜນການຈັດຕັ້ງປະຕິບັດ ແລະ ຕາຕະລາງການເຮັດວຽກ
     - ສັງລວມແຜນງົບປະມານ
     - ຕາຕະລາງ ຄິດໄລ່ອັດຕາກິນ, ຄ່າທີ່ພັກ (ກໍລະນີໄດ້ຄ້າງຄືນ)
     - ຕາຕະລາງ ຄິດໄລ່ຄ່ານ້ຳມັນລົດ
     - ໃຫ້ນຳໃຊ້ອັດຕາການຄິດໄລ່ຕາມທີ່ກະຊວງການເງິນກຳນົດໄວ້
   - ສະຖານອາຊີວະສຶກສາຕ້ອງສະຫຼຸບງົບປະມານໃນການລົງເຮັດວຽກໃນພື້ນທີ່ພ້ອມທັງປະກອບເອກະສານຊຳລະສະສາງ ແລ້ວສົ່ງໃຫ້ຄະນະຮັບຜິດຊອບໂຄງການ ພາຍໃນ 2 ອາທິດ ຫຼັງສຳເລັດວຽກ ຊຶ່ງປະກອບມີ:
     - ບົດລາຍງານການລົງເຮັດວຽກຕົວຈິງ
     - ໃບລົງທະບຽນຂອງຜູ້ລົງເຮັດວຽກ ແລະ ຜູ້ທີ່ຮ່ວມເຮັດວຽກໃນທ້ອງທີ່
     - ບົດສະຫລຸບລາຍຈ່າຍ
     - ຕາຕະລາງເບີກຈ່າຍ ອັດຕາກິນ ແລະ ຄ່າທີ່ພັກ (ກໍລະນີໄດ້ຄ້າງຄືນ)
     - ບິນນ້ຳມັນ

7. ສັງລວມລາຍຊື່ເບື້ອງຕົ້ນຂອງຜູ້ທີ່ຖືກຄັດເລືອກໃຫ້ໄດ້ຮັບທຶນເບ້ຍລ້ຽງ
   - ພາຍຫຼັງທີ່ໄດ້ລົງເຮັດວຽກໃນພື້ນທີ່ແລ້ວ ສະຖານອາຊີວະສຶກສາຕ້ອງນຳເອົາເອກະສານການສະໝັກເພື່ອຮັບທຶນເບ້ຍລ້ຽງຄົບຊຸດ ມາໃຫ້ຄະນະກຳມະການຄັດເລືອກນັກຮຽນເບ້ຍລ້ຽງ ພິຈາລະນາ ແລະ ຄັດເລືອກ
   - ລາຍຊື່ທັງໝົດຂອງຜູ້ສະໝັກທີ່ຄະນະກຳມະການຄັດເລືອກນັກຮຽນເບ້ຍລ້ຽງເຫັນວ່າມີຄວາມເໝາະສົມຈະໄດ້ຮັບທຶນເບ້ຍລ້ຽງ ຕ້ອງສົ່ງໃຫ້ຄະນະຮັບຜິດຊອບໂຄງການ ພ້ອມທັງຄັດຕິດເອກະສານສະໝັກຄົບຊຸດ
   - ກຳນົດສົ່ງລາຍຊື່ເບື້ອງຕົ້ນແມ່ນຊ້າສຸດ 2 ອາທິດກ່ອນເປີດຮຽນ
8. ການທົບທວນບົດສະເໜີ ແລະ ການຮັບຮອງເອົານັກຮຽນເບ້ຍລ້ຽງ
   - ຄະນະຮັບຜິດຊອບໂຄງການ ທົບທວນ ແລະ ພິຈາລະນາ ການຂໍທຶນເບ້ຍລ້ຽງທີ່ສະຖານອາຊີວະສຶກສາສົ່ງມາ
   - ລາຍງານຫາຄະນະນຳກະຊວງເພື່ອຂໍຄຳເຫັນ ແລະ ທິດຊີ້ນຳໃນການອະນຸມັດທຶນເບ້ຍລ້ຽງ
   - ກົມອາຊີວະສຶກສາ/ໂຄງການ ແຈ້ງໃຫ້ສະຖານອາຊີວະສຶກສາຮັບຊາບ ສຳລັບ ລາຍຊື່ຂອງຜູ້ທີ່ ຖືກອະນຸມັດໃຫ້ໄດ້ຮັບທຶນເບ້ຍລ້ຽງ
9. ການເຜີຍແຜ່ລາຍຊື່ຜູ້ໄດ້ຮັບທຶນເບ້ຍລ້ຽງ
   - ສະຖານອາຊີວະສຶກສາຕ້ອງປະກາດກ່ຽວກັບລາຍຊື່ຜູ້ໄດ້ຮັບທຶນໃນທີ່ສາທາລະນະ ແລະ ແຈ້ງໃຫ້ຜູ້ທີ່ໄດ້ຮັບທຶນເບ້ຍລ້ຽງມາລົງທະບຽນຮຽນ ແລະ ເຊັນສັນຍາຮັບທຶນ
10. ການລົງທະບຽນ ແລະ ເຊັນສັນຍາຮັບທຶນເບ້ຍລ້ຽງ
   - ນັກຮຽນເບ້ຍລ້ຽງມາລົງທະບຽນຢູ່ສະຖານອາຊີວະສຶກສາທີ່ກ່ຽວຂ້ອງ ແລະ ເຊັນສັນຍາຮັບທຶນເບ້ຍລ້ຽງ
   - ໃຫ້ສະຖານອາຊີວະສຶກສາ ຮັບຜິດຊອບຊ່ວຍອອກຄ່າໃຊ້ຈ່າຍລ່ວງໜ້າໃຫ້ນັກຮຽນເບຍລ້ຽງ ໃນຊ່ວງໄລຍະທີ່ລໍຖ້າການໂອນເງິນຈາກໂຄງການ

VIII. ຂັ້ນຕອນການຈັດຕັ້ງປະຕິບັດ

ຂັ້ນຕອນການຈັດຕັ້ງປະຕິບັດໄດ້ແບ່ງອອກເປັນ 2 ຮູບແບບຄື: ການຈັດຕັ້ງປະຕິບັດໃນເວລາເປີດຫຼັກສູດໃໝ່ ຫຼື ເປີດສົກຮຽນໃໝ່ ແລະ ການຈັດຕັ້ງປະຕິບັດພາຍໃນເດືອນ

1. ຂັ້ນຕອນການຈັດຕັ້ງປະຕິບັດໃນເວລາເປີດຫຼັກສູດໃໝ່ ຫຼື ເປີດສົກຮຽນໃໝ່
   - ດຳເນີນຂັ້ນຕອນການຄັດເລືອກນັກຮຽນເບ້ຍລ້ຽງຈົນສຳເລັດ (ສຳລັບນັກຮຽນໃໝ່)
   - ສະຖານອາຊີວະສຶກສາສົ່ງລາຍຊື່ສຸດທ້າຍຂອງນັກຮຽນທີ່ມາລົງທະບຽນຮຽນ ແລະ ມີໜ້າຕົວຈິງ ໃຫ້ຄະນະຮັບຜິດຊອບໂຄງການ ຊ້າສຸດ 1 ອາທິດຫຼັງເປີດຮຽນ
     - ຄັດຕິດສັນຍາຮັບທຶນເບ້ຍລ້ຽງສະບັບຕົ້ນ (ສຳລັບນັກຮຽນໃໝ່)
     - ລະບຸເລກທີໃບຢັ້ງຢືນການໃຫ້ທຶນເບ້ຍລ້ຽງ ຫຼື ລະຫັດນັກສຶກສາ (ສຳລັບນັກຮຽນປີທີ 2 ຫຼັກສູດ C3)
     - ຄັດຕິດເອກະສານຂໍເບີກຈ່າຍເງິນເບ້ຍລ້ຽງນັກຮຽນ ແລະ ເອກະສານຂໍເບີກຈ່າຍເງິນຄ່າທຳນຽມຕ່າງໆ ສົ່ງໃຫ້ຄະນະຮັບຜິດຊອບໂຄງການ ຊ້າສຸດ 1 ອາທິດຫຼັງເປີດຮຽນ
   - ຄະນະຮັບຜິດຊອບໂຄງການລາຍງານຕໍ່ຄະນະນຳກະຊວງເພື່ອຂໍອອກຂໍ້ຕົກລົງຮັບຮອງເອົານັກຮຽນເບ້ຍລ້ຽງ
   - ທີມງານໂຄງການ SSTVET ດຳເນີນການເບີກຈ່າຍ ແລ້ວແຈ້ງໃຫ້ສະຖານອາຊີວະສຶກສາຮັບຮູ້
   - ສະຖານອາຊີວະສຶກສາເຮັດໜັງສືແຈ້ງຄືນຫາຄະນະຮັບຜິດຊອບໂຄງການກ່ຽວກັບການໄດ້ຮັບເງິນໂອນ
2. ຂັ້ນຕອນການຈັດຕັ້ງປະຕິບັດພາຍໃນເດືອນທີ່ໄດ້ດຳເນີນການເປີດຫຼັກສູດໄປແລ້ວ
   - ສະຖານອາຊີວະສຶກສາສົ່ງລາຍຊື່ນັກຮຽນມີໜ້າ ແລະ ອັດຕາເຂົ້າຮຽນປະຈຳເດືອນ ພ້ອມທັງ ລາຍຊື່ນັກຮຽນປະລະ ສົ່ງໃຫ້ຄະນະຮັບຜິດຊອບໂຄງການ ທຸກໆວັນທີ 25 ຂອງແຕ່ລະເດືອນ ພ້ອມທັງຄັດຕິດເອກະສານຂໍເບີກຈ່າຍເງິນເບ້ຍລ້ຽງນັກຮຽນປະຈຳເດືອນ ແລະ ເອກະສານຂໍເບີກຈ່າຍເງິນຄ່າທຳນຽມປະຈຳເດືອນ
   - ທີມງານໂຄງການ SSTVET ດຳເນີນການເບີກຈ່າຍ
   - ແຈ້ງໃຫ້ສະຖານອາຊີວະສຶກສາຮັບຮູ້ກ່ຽວກັບການໂອນເງິນໃຫ້ນັກຮຽນເພື່ອແຈ້ງຕໍ່ໃຫ້ນັກຮຽນ

IX. ການຈັດສັນງົບປະມານ

ໂຄງການຈະສະໜອງທຶນເບ້ຍລ້ຽງໃຫ້ແກ່ນັກຮຽນທີ່ຜ່ານການຄັດເລືອກວ່າເປັນຜູ້ທີ່ເໝາະສົມໄດ້ຮັບທຶນ ຊຶ່ງກວມເອົາ ຄ່າໃຊ້ຈ່າຍສ່ວນຕົວ ແລະ ຄ່າໃຊ້ຈ່າຍໃນການຮຽນ

- ຄ່າໃຊ້ຈ່າຍສ່ວນຕົວຈະໂອນໃຫ້ນັກສຶກສາໂດຍກົງໃນແຕ່ລະເດືອນ ຊຶ່ງລວມມີ:
  - ເງິນເບ້ຍລ້ຽງຊຶ່ງຄິດໄລ່ເປັນຈຳນວນມອບເໝົາ 620,000 ກີບ/ເດືອນ ສຳລັບ ຜູ້ທີ່ມີອັດຕາການເຂົ້າຮຽນ 85% ຂຶ້ນໄປ ແລະ ຕ້ອງບໍ່ຂາດຮຽນໂດຍບໍ່ມີເຫດຜົນເກີນ 2 ວັນ/ເດືອນ. ຊຶ່ງກວມເອົາຄ່າໃຊ້ຈ່າຍດັ່ງນີ້: ຄ່າອາຫານ, ຄ່າເຄື່ອງນຸ່ງ, ຄ່າອຸປະກອນການຂຽນ, ຄ່າໃຊ້ຈ່າຍສ່ວນຕົວອື່ນໆ, ແລະ ຄ່າທຳນຽມທະນາຄານ
  - ຄ່າເດີນທາງ 80,000 ກີບ/ຄັ້ງ, ເບີກຈ່າຍ 2 ຄັ້ງຕໍ່ຫຼັກສູດ ຫຼື ຕໍ່ສີກປີ, ເບີກຈ່າຍໃນເດືອນທຳອິດ ແລະ ເດືອນສຸດທ້າຍຂອງຫຼັກສູດ ຫຼື ສີກປີ (ຫຼັກສູດໄລຍະສັ້ນທີ່ບໍ່ເກີນ 10 ເດືອນຈະເບີກຈ່າຍ 2 ຄັ້ງຕໍ່ຫຼັກສູດ, ຫຼັກສູດໄລຍະຍາວຈະຈ່າຍ 2 ຄັ້ງຕໍ່ປີ).
- ຄ່າໃຊ້ຈ່າຍຕ່າງໆທີ່ຕິດພັນກັບການຮຽນແມ່ນຈະໂອນໃຫ້ສະຖານອາຊີວະສຶກສາໃນເວລາເປີດຫຼັກສູດໃໝ່ ຫຼື ເປີດສີກຮຽນໃໝ່ ຄິດເປັນມູນຄ່າ ມອບເໝົາສະເລ່ຍຕໍ່ເດືອນ ຊຶ່ງລວມມີຄ່າໃຊ້ຈ່າຍຕ່າງໆດັ່ງນີ້:
  - ຄ່າທຳນຽມຕ່າງໆສະເລ່ຍເດືອນລະ 170,000 ກີບ/ເດືອນ ຊຶ່ງກວມເອົາ: ຄ່າທຳນຽມໃບປະກາດ, ຄ່າບໍລິການເອກະສານ, ຄ່າລົງທະບຽນນັກສຶກສາ, ຄ່າຮຽນ, ຄ່າປົ້ມແບບຮຽນ, ຄ່າວັດຖຸສິ້ນເປືອງ, ຄ່າລົງຝຶກຫັດພາກປະຕິບັດ ແລະ ຄ່າທຳນຽມອື່ນໆທີ່ຕິດພັນກັບການຮຽນ
  - ຄ່າບຳລຸງຮັກສາຫໍພັກ ຈຳນວນ 40,000 ກີບ/ເດືອນ ໂດຍຈະຈ່າຍແຕ່ລະເດືອນພ້ອມຄ່າທຳນຽມ
  - ຄ່າຊຸດເຄື່ອງແບບ ຫຼື ຊຸດປະຕິບັດງານ ຊຸດລະ 150,000 ກີບ (ຫຼັກສູດໄລຍະສັ້ນທີ່ບໍ່ເກີນ 10 ເດືອນກຳນົດໃຫ້ 2 ຊຸດ/ຫຼັກສູດ, ຫຼັກສູດໄລຍະຍາວກຳນົດໃຫ້ 2 ຊຸດ/ປີ) ເບີກຈ່າຍໃນເດືອນທຳອິດຂອງຫຼັກສູດ ຫຼື ສີກປີ
- ພາຍຫຼັງທີ່ໄດ້ຈັດສັນຕົວເລກນັກຮຽນທຶນເບ້ຍລ້ຽງໃນແຕ່ລະປີແລ້ວ, ສະຖານອາຊີວະສຶກສາຕ້ອງໄດ້ຄິດໄລ່ງົບປະມານທັງໝົດສຳລັບຈຳນວນທຶນທີ່ໄດ້ຮັບທັງໝົດ ແລ້ວສົ່ງໃຫ້ຄະນະຮັບຜິດຊອບໂຄງການ
- ລາຍລະອຽດໃນການຄິດໄລ່ອັດຕາທຶນເບ້ຍລ້ຽງແມ່ນໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ 6

X. ການຊຳລະສະສາງ

ການຊຳລະສະສາງແບ່ງອອກເປັນ 2 ຮູບແບບຄື: ການເບີກຈ່າຍເງິນບ້ວງຄ່າທຳນຽມຕ່າງໆໃຫ້ສະຖານອາຊີວະສຶກສາທີ່ຮ່ວມໃນໂຄງການ ແລະ ການເບີກຈ່າຍເງິນບ້ວງເບ້ຍລ້ຽງນັກຮຽນປະຈຳເດືອນໃຫ້ນັກຮຽນ.

1. ການເບີກຈ່າຍເງິນບ້ວງຄ່າທຳນຽມຕ່າງໆໃຫ້ສະຖານອາຊີວະສຶກສາລວມທັງໝົດມີ 5 ຂັ້ນຕອນຄື:

   1.1. ສະຖານອາຊີວະສຶກສາສັງລວມເອກະສານຂໍເບີກຈ່າຍຄ່າທຳນຽມຕ່າງໆສົ່ງໃຫ້ຄະນະຮັບຜິດຊອບໂຄງການ ຊ້າສຸດບໍ່ໃຫ້ກາຍ 1 ອາທິດຫຼັງຈາກເປີດສີກຮຽນໃໝ່ ຫຼື ເປີດຫຼັກສູດໃໝ່ ແລະ ທຸກໆວັນທີ 25 ຂອງເດືອນ ຊຶ່ງປະກອບມີ:
   - ໃບສະເໜີ (ສະຖານ ອສ ສົ່ງຫາ ຄະນະຮັບຜິດຊອບໂຄງການ)
   - ໃບຮຽກເກັບເງິນ
   - ຕາຕະລາງຄິດໄລ່ຄ່າໃຊ້ຈ່າຍປະຈຳເດືອນ
   - ຕາຕະລາງສັງລວມລາຍຊື່ນັກຮຽນ

   ຫຼັງຈາກໄດ້ຮັບເອກະສານແລ້ວ ທີມງານໂຄງການ SSTVET ຕ້ອງປະກອບເອກະສານເພີ້ມຕື່ມຄື:
   - ບົດບັນທຶກກ່ຽວກັບການຈັດຕັ້ງປະຕິບັດວຽກງານເບ້ຍລ້ຽງພາຍໃຕ້ໂຄງການ SSTVET (MOA)
   - ຂໍ້ຕົກລົງຮັບຮອງເອົານັກຮຽນເບ້ຍລ້ຽງ

   1.2.ທີມງານໂຄງການ SSTVET ສັງລວມເອກະສານຂໍເບີກຈ່າຍສົ່ງໃຫ້ກົມການເງິນ, ກະຊວງ ສສກ

   1.3.ທີມງານໂຄງການ SSTVET ປະກອບເອກະສານສົ່ງຕໍ່ໃຫ້ຄັງເງິນແຫ່ງຊາດກະຊວງການເງິນ

1.4.ເບີກຈ່າຍເງິນໃຫ້ສະຖານອາຊີວະສຶກສາໂດຍຜ່ານບັນຊີສະເພາະຂອງໂຄງການ

1.5.ຫຼັງຈາກໄດ້ຮັບເງິນໂອນແລ້ວ, ສະຖານອາຊີວະສຶກສາລາຍງານໃຫ້ຄະນະຮັບຜິດຊອບໂຄງການຮັບຊາບ

ຂໍ້ມູນເພີ້ມຕື່ມ:

- ສະຖານອາຊີວະສຶກສາຕ້ອງເປີດບັນຊີຍ່ອຍ ຕາມແຈ້ງການຈາກກົມການເງິນ, ກະຊວງ ສສກ
- ຄ່າໃຊ້ຈ່າຍບ້ວງຄ່າທຳນຽມຕ່າງໆແມ່ນຄິດໄລ່ເປັນມູນຄ່າມອບເໝົາຕໍ່ເດືອນ ໂດຍຄິດໄລ່ຈາກອັດຕາສະເລ່ຍທີ່ກຳນົດໄວ້ໃນເອກະສານຊ້ອນທ້າຍ 8 ລາຍລະອຽດໃນການຄິດໄລ່ອັດຕາທຶນເບ້ຍລ້ຽງ
- ເບີກຈ່າຍ 1 ຄັ້ງ/ເດືອນ
- ສະຖານອາຊີວະສຶກສາຕ້ອງສົ່ງເອກະສານຂໍເບີກຈ່າຍໃຫ້ໂຄງການທຸກໆວັນທີ 25 ຂອງເດືອນ

2. ການເບີກຈ່າຍເງິນບ້ວງເບ້ຍລ້ຽງນັກຮຽນແບ່ງອອກເປັນ 2 ແບບຄື:

2.1. ການເບີກຈ່າຍເງິນເບ້ຍລ້ຽງໃຫ້ນັກຮຽນໃນຊ່ວງການເປີດສົກຮຽນໃໝ່, ເປີດຫຼັກສູດໃໝ່, ຮອບວຽນການສຳຮອງເງິນໃໝ່ ລວມມີ 5 ຂັ້ນຕອນດັ່ງນີ້:

2.1.1. ສະຖານອາຊີວະສຶກສາສົ່ງລວມເອກະສານສົ່ງໃຫ້ໂຄງການ ຊ້າສຸດບໍ່ໃຫ້ກາຍ 1 ອາທິດຫຼັງຈາກເປີດຮຽນ ຊຶ່ງປະກອບມີ:

- ໃບສະເໜີ (ສະຖານ ອສ ສົ່ງຫາ ຄະນະຮັບຜິດຊອບໂຄງການ)
- ຕາຕະລາງຄິດໄລ່ເບ້ຍລ້ຽງປະຈຳເດືອນ
- ຕາຕະລາງສົ່ງລວມລາຍຊື່ນັກຮຽນ

ຫຼັງຈາກໄດ້ຮັບເອກະສານແລ້ວ ທີມງານໂຄງການ SSTVET ປະກອບເອກະສານເພີ້ມຕື່ມຄື:

- ຂໍ້ຕົກລົງຮັບຮອງເອົານັກຮຽນເບ້ຍລ້ຽງ
- ຕາຕະລາງຄິດໄລ່ເງິນເບ້ຍລ້ຽງລ່ວງໜ້າສຳລັບ 2 ເດືອນ

2.1.2. ທີມງານໂຄງການ SSTVET ສົ່ງລວມເອກະສານຂໍເບີກຈ່າຍສົ່ງໃຫ້ກົມການເງິນ, ກະຊວງ ສສກ

2.1.3. ທີມງານໂຄງການ SSTVET ປະກອບເອກະສານສົ່ງຕໍ່ໃຫ້ຄັງເງິນແຫ່ງຊາດ, ກະຊວງການເງິນ

2.1.4. ໂອນເງິນຈາກບັນຊີສະເພາະມາໄວ້ບັນຊີເງິນກີບຂອງໂຄງການ (ມູນຄ່າເງິນສຳຮອງຕໍ່ຮອບວຽນແມ່ນຄິດໄລ່ເປັນມູນຄ່າຂອງເງິນເບ້ຍລ້ຽງນັກຮຽນທັງໝົດສຳລັບ 2 ເດືອນ)

2.1.5. ໂອນເງິນຈາກບັນຊີເງິນກີບຂອງໂຄງການໃຫ້ນັກຮຽນ

2.2. ການເບີກຈ່າຍເງິນເບ້ຍລ້ຽງໃຫ້ນັກຮຽນພາຍໃນເດືອນ ລວມມີ 4 ຂັ້ນຕອນດັ່ງນີ້:

2.2.1. ສະຖານອາຊີວະສຶກສາສົ່ງລວມເອກະສານສົ່ງໃຫ້ໂຄງການ ທຸກໆວັນທີ 25 ຂອງເດືອນ ຊຶ່ງປະກອບມີ:

- ບົດລາຍງານປະຈຳເດືອນ (ສະຖານ ອສ ສົ່ງຫາ ຄະນະຮັບຜິດຊອບໂຄງການ)
- ຕາຕະລາງຄິດໄລ່ເບ້ຍລ້ຽງປະຈຳເດືອນ
- ຕາຕະລາງສົ່ງລວມລາຍຊື່ນັກຮຽນມີໜ້າ

ຫຼັງຈາກໄດ້ຮັບເອກະສານແລ້ວ ທີມງານໂຄງການ SSTVET ປະກອບເອກະສານເພີ້ມຕື່ມຄື:

- ຕາຕະລາງຕິດຕາມການເບີກຈ່າຍເງິນເບ້ຍລ້ຽງນັກຮຽນປະຈຳເດືອນຈາກເງິນສຳຮອງໃນບັນຊີເງິນກີບໂຄງການ
- ເອກະສານການເບີກຈ່າຍຄັ້ງກ່ອນສະບັບສຳເນົາ

2.2.2. ທີມງານໂຄງການ SSTVET ສົ່ງລວມເອກະສານຂໍເບີກຈ່າຍສົ່ງໃຫ້ກົມການເງິນ, ກະຊວງ ສສກ

2.2.3. ທີມງານໂຄງການ SSTVET ດຳເນີນການເບີກຈ່າຍ

2.2.4. ໂອນເງິນຈາກບັນຊີເງິນກີບຂອງໂຄງການໃຫ້ນັກຮຽນ

ຂໍ້ມູນເພີ່ມຕື່ມ:

- ໂຄງການຕ້ອງປະກອບເອກະສານຂໍໂອນເງິນເບ້ຍລ້ຽງລ່ວງໜ້າມາສຳຮອງໄວ້ໃນບັນຊີເງິນກີບໂຄງການ, ມູນຄ່າເງິນສຳຮອງຕໍ່ຮອບວຽນແມ່ນຄິດໄລ່ເປັນມູນຄ່າຂອງເງິນເບ້ຍລ້ຽງນັກຮຽນທັງໝົດສຳລັບ 2 ເດືອນ
- ເງິນເບ້ຍລ້ຽງນັກຮຽນປະຈຳເດືອນຈະເບີກຈ່າຍທຸກໆເດືອນ ເດືອນລະ 1 ຄັ້ງ
- ເງິນເບ້ຍລ້ຽງນັກຮຽນຈະເບີກຈ່າຍຕາມຈຳນວນນັກຮຽນມີໜ້າຕົວຈິງໃນແຕ່ລະເດືອນ ແລະ ອີງຕາມເງື່ອນໄຂການເຂົ້າຮຽນທີ່ກຳນົດໄວ້. ສຳລັບ ຜູ້ທີ່ຂາດຮຽນຍ້ອນມີເຫດຈຳເປັນເຊັ່ນ: ການເຈັບປ່ວຍ, ອຸບັດຕິເຫດ ແລະ ສາເຫດອື່ນໆ, ໃຫ້ສະຖານອາຊີວະສຶກສາເປັນຜູ້ພິຈາລະນາ ແລະ ຢັ້ງຢືນ

ໝາຍເຫດ:

- ການເບີກຈ່າຍເງິນຄ່າບໍລິການຕ່າງໆທີ່ຕິດພັນກັບການຮຽນໃຫ້ແກ່ສະຖານອາຊີວະສຶກສາອາດຈະໃຊ້ເວລານານກວ່າການເບີກຈ່າຍເງິນເບ້ຍລ້ຽງໃຫ້ນັກຮຽນ ເພາະວ່າຄ່າບໍລິການແມ່ນຈະໄດ້ໂອນຜ່ານບັນຊີພິເສດຂອງໂຄງການ ບໍ່ແມ່ນໂອນຈາກບັນຊີເງິນກີບຂອງໂຄງການຄືກັນກັບເງິນເບ້ຍລ້ຽງນັກຮຽນ
- ເພື່ອເປັນການຫຼຸດຜ່ອນຄວາມເປັນໄປໄດ້ໃນການປະລະການສຶກສາຮຽກຮ້ອງໃຫ້ການເບີກຈ່າຍເບ້ຍລ້ຽງໃຫ້ນັກຮຽນທັນເວລາ. ສະຖານອາຊີວະສຶກສາຈະຕ້ອງນຳສົ່ງເອກະສານຂໍເບີກຈ່າຍເງິນເບ້ຍລ້ຽງປະຈຳເດືອນໃຫ້ນັກຮຽນໃນທຸກໆວັນທີ 25 ຂອງແຕ່ລະເດືອນ ເພື່ອຫຼີກລ້ຽງການລ້າຊ້າ

XI. ແຜນການໃຫ້ທຶນເບ້ຍລ້ຽງ

ການຈັດສັນທຶນເບ້ຍລ້ຽງແມ່ນອີງຕາມຄວາມເໝາະສົມ ແລະ ຄວາມອາດສາມາດຂອງແຕ່ລະສະຖານອາຊີວະສຶກສາ ວ່າສາມາດຮອງຮັບນັກຮຽນໄດ້ຫຼາຍພຽງໃດ. ຕາຕະລາງລຸ່ມນີ້ ແມ່ນການຄາດຄະເນຈຳນວນທຶນເບື້ອງຕົ້ນສຳລັບແຕ່ລະຫຼັກສູດໃນໄລຍະຂອງໂຄງການ, ຊຶ່ງຈະໄດ້ດັດແກ້ໃນກອງປະຊຸມທົບທວນກົດຈະກຳເບ້ຍລ້ຽງປະຈຳປີ. ນອກຈາກນີ້, ໃນໄລຍະເວລາການຈັດຕັ້ງປະຕິບັດຕົວຈິງ ການຈັດສັນທຶນໃຫ້ແຕ່ລະສະຖານອາຊີວະສຶກສາຕ້ອງມີການປັບປຸງ ແລະ ຕົກລົງກັນໃນແຕ່ລະຊ່ວງໄລຍະຂອງການຈັດຕັ້ງປະຕິບັດເພື່ອໃຫ້ແທດເໝາະກັບສະພາບຕົວຈິງ. ພາຍຫຼັງທີ່ໄດ້ຈັດແບ່ງຕົວເລກນັກຮຽນທຶນເບ້ຍລ້ຽງແລ້ວ, ສະຖານອາຊີວະສຶກສາຕ້ອງສົ່ງແຜນຮັບນັກຮຽນເບ້ຍລ້ຽງໃຫ້ຄະນະຮັບຜິດຊອບໂຄງການພາຍໃນ 1 ອາທິດ

ແຜນການໃຫ້ທຶນເບ້ຍລ້ຽງ	ເລີ່ມ	ສຳເລັດ	ຈ/ນ ທຶນ 4900	ໝາຍເຫດ
ຫຼັກສູດໄລຍະສັ້ນ - 4 ເດືອນ	12-02-2018	09-04-2021	1600	ຈຳນວນທຶນສຳລັບແຕ່ລະສະຖານອາຊີວະສຶກສາ ຈະຈັດສັນໃນກອງປະຊຸມ ເດືອນພະຈິກ 2017
Year 2018	12-02-2018	21-12-2018	400	
Year 2019	12-02-2019	20-12-2019	400	
Year 2020	12-02-2020	21-12-2020	400	
Year 2021	11-01-2021	09-04-2021	400	
ຫຼັກສູດໄລຍະສັ້ນ - 6 ເດືອນ	12-02-2018	21-12-2020	900	ຈຳນວນທຶນສຳລັບແຕ່ລະສະຖານອາຊີວະສຶກສາ ຈະຈັດສັນໃນກອງປະຊຸມ ເດືອນພະຈິກ 2017
Year 2018	12-02-2018	21-12-2018	300	
Year 2019	12-02-2019	20-12-2019	300	
Year 2020	12-02-2020	21-12-2020	300	
ຫຼັກສູດໄລຍະສັ້ນ - 10 ເດືອນ	12-02-2018	21-12-2020	600	ຈຳນວນທຶນສຳລັບແຕ່ລະສະຖານອາຊີວະສຶກສາ ຈະຈັດສັນໃນກອງປະຊຸມ ເດືອນພະຈິກ 2017
Year 2018	12-02-2018	21-12-2018	200	
Year 2019	12-02-2019	20-12-2019	200	
Year 2020	12-02-2020	21-12-2020	200	
ຫຼັກສູດໄລຍະຍາວ - 2 ປີ	02-10-2017	31-07-2019	1600	ການຈັດສັນທຶນລະບຸໄວ້ໃນເອກະສານຊ້ອນທ້າຍ 7 ຄາດຄະເນວ່າ 200 ຄົນຈະສືບຕໍ່ໃນຫຼັກສູດວິຊາຊີບຊັ້ນກາງ
Year 2017-18	02-10-2017	31-07-2018	600	
Year 2018-19	01-10-2018	31-07-2019	800	
Year 2019-20	01-10-2018	31-07-2019	200	
ຫຼັກສູດວິຊາຊີບຊັ້ນກາງ - C3 ສືບຕໍ່	01-10-2019	31-07-2020	200	ສຳລັບຜູ້ທີ່ສຳເລັດ C3 ແລະ ຕ້ອງການສືບຕໍ່
Year 2019-20	01-10-2019	31-07-2020	200	ຄາດຄະເນວ່າ 200 ຄົນທີ່ສຳເລັດ C3 ຈະສືບຕໍ່

XII. ແຜນການຈັດຕັ້ງປະຕິບັດ

ການສະໜອງທຶນເບ້ຍລ້ຽງແມ່ນວຽກງານໜຶ່ງທີ່ລະອຽດ ແລະ ຕ້ອງໄດ້ໃສ່ໃຈແຕ່ລະລາຍລະອຽດ, ຕາຕະລາງລຸ່ມນີ້ ແມ່ນແຜນການຈັດຕັ້ງປະຕິບັດໂດຍລວມ ຊຶ່ງໄດ້ກຳນົດລາຍລະອຽດຂອງປີ 2017 ເທົ່ານັ້ນ, ສະນັ້ນ ໃນກອງປະຊຸມທົບທວນການຈັດຕັ້ງປະຕິບັດກິດຈະກຳເບ້ຍລ້ຽງປະຈຳປີ ຈະຕ້ອງໄດ້ກຳນົດແຜນລະອຽດສຳລັບສົກປີຕໍ່ໜ້າ.

No.	Description	Start	Finish	Remark
I. Implemntation Plan for Year 2017				
1	Conceptal Meeting	10-07-2017	12-07-2017	With 8 Colleges, at VTE
2	Establisment of Stipend Committee at School	17-07-2017	20-07-2017	Work at 8 Colleges
3	SUM of Meeting & Draft Stipend Manual	17-07-2017	25-07-2017	Submit Draft Manual on 25/7
4	Pre-Start Meeting & Manual Approval	02-08-2017	03-08-2017	PIU/SSTVET To Prepare the Meeting
	4.1 Present Manual for Approval			PIU/SSTVET Present
	4.2 Introduce All Forms			PIU/SSTVET Present
	4.3 Clarify the Steps of Payment			DOF Suggestion
	4.4 Discuss About C1, C2, C3 Development			VEDI Suggestion + 8 Colleges
	4.5 Assign Action Plan for Year 2017			All Participants
5	Training for Schools about Payment Doc.	04-09-2017	15-09-2017	Date To Be Clarified in Aug 2017 Meeting
6	Selection of Stipend Beneficiaries	07-08-2017	20-09-2017	Advertising & Schools Activities
7	Final Selection Review & List Submitted to SSTVET	02-10-2017	10-10-2017	No Later than 10 Oct 2017
8	Payment of Enrolment Fee	13-10-2017	13-10-2017	Date To Be Clarified in Aug 2017 Meeting
9	Monthly Payment for Stipends (Once a Month)	13-10-2017	08-12-2017	Date To Be Clarified in Aug 2017 Meeting
10	C1, C2, C3 Development Meeting	15-11-2017	17-11-2017	Date To Be Confirmed in Aug 2017 Meeting
11	Quarterly Status Monitoring by School	25-12-2017	25-12-2017	Date To Be Clarified in Aug 2017 Meeting
II. Implemntation Plan for Year 2018-2019-2020				
1	Recruitment of Stipends (For 2018-19)	January	November	Time to Time
2	Semi-Annual Meeting 1	12-Feb	15-Feb	Review and Improve
3	Semi-Annual Meeting 2	06-Aug	09-Aug	Review and Improve
4	Follow Up (Field Work)	January	November	Every 4 Months
5	Monthly/Quarterly Data Reporting by School	January	December	To Be Included in Payment Request
6	Monthly Payment for Stipends (Once a Month)	January	December	End of the Month before
III. Implemntation Plan for Year 2021				
1	Start Last Training Batch for C1	11-01-2021	9-04-2021	For C1 ONLY
2	Monthly/Quarterly Data Reporting by School	11-01-2021	13-01-2021	To Be Included in Payment Request
3	Monthly Payment for Stipends (Once a Month)	20-01-2021	8-03-2021	End of the Month before
4	Final Meeting	26-04-2021	29-04-2021	Review and SUM

ລາຍການເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍ 1: ແຜນວາດສັງລວມຂັ້ນຕອນການຄັດເລືອກນັກຮຽນເບ້ຍລ້ຽງ

ເອກະສານຊ້ອນທ້າຍ 2: ແຜນວາດສັງລວມຂັ້ນຕອນການຈັດຕັ້ງປະຕິບັດ

ເອກະສານຊ້ອນທ້າຍ 3: ແຜນວາດສັງລວມຂັ້ນຕອນການເບີກຈ່າຍເງິນຄ່າທຳນຽມຕ່າງໆໃຫ້ແກ່ສະຖານ ອສ

ເອກະສານຊ້ອນທ້າຍ 4: ແຜນວາດສັງລວມຂັ້ນຕອນການເບີກຈ່າຍເງິນເບ້ຍລ້ຽງນັກຮຽນປະຈຳເດືອນ

ເອກະສານຊ້ອນທ້າຍ 5: ແຜນວາດສັງລວມຮອບວຽນການຄ່ຽນເງິນເບ້ຍລ້ຽງນັກຮຽນ

ເອກະສານຊ້ອນທ້າຍ 6: ລາຍລະອຽດໃນການຄິດໄລ່ອັດຕາທຶນເບ້ຍລ້ຽງ

ເອກະສານຊ້ອນທ້າຍ 7: ລາຍຊື່ 13 ສາຂາທີ່ພັດທະນາໃນໂຄງການ STVET ແລະ ການຈັດແບ່ງທຶນປີ 2017

ເອກະສານຊ້ອນທ້າຍ 8: ຕາຕະລາງສັງລວມສາຂາວິຊາທີ່ກຳນົດໃຫ້ເປັນສາຂາວິຊາຫຼັກໃນແຕ່ລະສະຖານ ອສ

ແຜນວາດສັງລວມຂັ້ນຕອນການຄັດເລືອກນັກຮຽນເບ້ຍລ້ຽງ



ແຜນວາດສັງລວມຂັ້ນຕອນການຈັດຕັ້ງປະຕິບັດ

ຂັ້ນຕອນການຈັດຕັ້ງປະຕິບັດໃນເວລາເປີດຫຼັກສູດໃໝ່ ຫຼື ເປີດສົກຮຽນໃໝ່

ດຳເນີນຂັ້ນຕອນການຄັດເລືອກນັກຮຽນເບ້ຍລ້ຽງຈົນສຳເລັດ (ນັກຮຽນໃໝ່)

↓

ສັງລວມລາຍຊື່ສຸດທ້າຍຂອງນັກຮຽນເບ້ຍລ້ຽງ
ຄັດຕິດສັນຍາສະບັບຕົ້ນ ແລະ ເອກະສານຂໍເບີກຈ່າຍ
- ສະຖານ ອສ ສົ່ງໃຫ້ຄະນະຮັບຜິດຊອບໂຄງການ (1 ອາທິດຫຼັງເປີດຮຽນ)

↓

ອອກໃບຢັ້ງຢືນການໃຫ້ທຶນເບ້ຍລ້ຽງ + ສະເໜີອອກຂໍ້ຕົກລົງ
- ຄະນະຮັບຜິດຊອບໂຄງການ

↓

ດຳເນີນການເບີກຈ່າຍ + ແຈ້ງໃຫ້ສະຖານ ອສ ຮັບຮູ້
- ທີມງານໂຄງການ

↓

ເຮັດໜັງສືແຈ້ງຄືນກ່ຽວກັບການໄດ້ຮັບເງິນໂອນ
- ສະຖານ ອສ ສົ່ງໃຫ້ຄະນະຮັບຜິດຊອບໂຄງການ

ຂັ້ນຕອນການຈັດຕັ້ງປະຕິບັດພາຍໃນເດືອນ

ສັງລວມລາຍຊື່ນັກຮຽນມີໜ້າ ແລະ
ອັດຕາເຂົ້າຮຽນປະຈຳເດືອນ
ພ້ອມທັງເອກະສານຂໍເບີກຈ່າຍ

- ສະຖານ ອສ ສົ່ງໃຫ້ຄະນະຮັບຜິດຊອບໂຄງການ
- ທຸກໆວັນທີ 25 ຂອງເດືອນ

↓

ດຳເນີນການເບີກຈ່າຍ
- ທີມງານໂຄງການ

↓

ແຈ້ງໃຫ້ສະຖານ ອສ ຮັບຮູ້ ເພື່ອແຈ້ງຕໍ່ຫານັກຮຽນ
- ທີມງານໂຄງການ

ແຜນວາດສັງລວມຂັ້ນຕອນການຂໍເບີກຈ່າຍເງິນຄ່າທຳນຽມຕ່າງໆສຳລັບສະຖານອາຊີວະສຶກສາ



ໝາຍເຫດ:

- ສະຖານອາຊີວະສຶກສາຕ້ອງເປີດບັນຊີຍ່ອຍອອກຊື່ ໂຄງການ/ຊື່ສະຖານ ອສ
- ຄ່າໃຊ້ຈ່າຍບ້ວງຄ່າທຳນຽມຕ່າງໆແມ່ນຄິດໄລ່ເປັນມູນຄ່າມອບເໝົາຕໍ່ເດືອນ
- ເບີກຈ່າຍ 1 ຄັ້ງ/ເດືອນ
- ສະຖານ ອສ ຕ້ອງສົ່ງເອກະສານຂໍເບີກຈ່າຍທຸກໆວັນທີ 25 ຂອງເດືອນ

ແຜນວາດສັງລວມຂັ້ນຕອນການຂໍເບີກຈ່າຍເງິນເບັ້ຍລ້ຽງນັກຮຽນປະຈຳເດືອນ



Appendix 5

Chart of Replenishment Plan of Stipend

Color Code

Document Process + Money In	Document Process	Money Transferred to BCEL/LAK	Monthly Stipend Payment

Year 2017				
	Oct	**Nov**	**Dec**	**Jan+1Year**
	Doc. + Money In	Money In		
	Payment	Payment		
		Doc.	Money In	Money In
			Payment	Payment
				Doc.

Year 2018 - 2019 -2020 -2021											
Feb	**Mar**	**Apr**	**May**	**Jun**	**Jul**	**Aug**	**Sep**	**Oct**	**Nov**	**Dec**	**Jan+1Year**
Money In	Money In										
Payment	Payment										
	Doc.	Money In	Money In								
		Payment	Payment								
			Doc.	Money In	Money In						
				Payment	Payment						
					Doc.	Money In	Money In				
						Payment	Payment				
							Doc.	Money In	Money In		
								Payment	Payment		
									Doc.	Money In	Money In
										Payment	Payment
											Doc.

INDICATIVE BUDGET FOR THE STIPEND PROGRAM

(Actual Cost in LAK - Amount in Million)

Course Level	Course Duration	Year	Batch No.	Number of Stipend	Stipend		School Fee		Grand Total	Remark	Est. No. of Students Per School
					Unit Cost	Total	Unit Cost	Total			
C1	04 Months	2018	B1	400	2.640	1,056	1.140	456	1,512	C1	50
C1		2019	B2	400	2.640	1,056	1.140	456	1,512	C1	50
C1		2020	B3	400	2.640	1,056	1.140	456	1,512	C1	50
C1		2021	B3	400	2.640	1,056	1.140	456	1,512	C1	50
Total				1,600		4,224		1,824	6,048		For 8 Schools
C2	06 Months	2018	B1	300	3.880	1,164	1.560	468	1,632	Grade 9 or C1 Countinous	38
C2		2019	B2	300	3.880	1,164	1.560	468	1,632	Grade 9 or C1 Countinous	38
C2		2020	B3	300	3.880	1,164	1.560	468	1,632	Grade 9 or C1 Countinous	38
Total				900		3,492		1,404	4,896		For 8 Schools
C2	10 Months	2018	B1	200	6.360	1,272	2.400	480	1,752	Start from C1	25
C2		2019	B2	200	6.360	1,272	2.400	480	1,752	Start from C1	25
C2		2020	B3	200	6.360	1,272	2.400	480	1,752	Start from C1	25
Total				600		3,816		1,440	5,256		For 8 Schools
C3	2 Years	2017-18	B1-Y1	600	6.360	3,816	2.400	1,440	5,256	Not Allocate for PLT&VHFTVC	DKX 60 + 108 for 5 Colleges
C3		2018-19	B1-Y2	600	6.360	3,816	2.400	1,440	5,256	Not Allocate for PLT&VHFTVC	DKX 60 + 108 for 5 Colleges
C3		2018-19	B2-Y1	200	6.360	1,272	2.400	480	1,752	For 8 Schools	25
C3		2019-20	B2-Y2	200	6.360	1,272	2.400	480	1,752	For 8 Schools	25
Total				1,600		10,176		3,840	14,016		
Diploma	1 Year	2019-20	B1	200	6.360	1,272	2.400	480	1,752	C3 Continous	33
Total				200		1,272		480	1,752	Not Allocate for PLT&VHFTVC	For 6 Schools
Grand Total				**4,900**		**22,980**		**8,988**	**31,968**	**If approved by ADB/MOES**	

SUM of Stipend Awarded

Year	C1 & C2		C3 & Diploma		Total Awarded	
	#Stipend	Cost	#Stipend	Cost	#Stipend	Cost
2017	-	-	600	5,256	600	5,256
2018	900	4,896	800	7,008	1,700	11,904
2019	900	4,896	400	3,504	1,300	8,400
2020	900	4,896	-	-	900	4,896
2021	400	1,512	-	-	400	1,512
SUM:	**3,100**	**16,200**	**1,800**	**15,768**	4,900	31,968

SUM of Payment Plan

Year	Payment for Stipend	Payment for School Fee	Total Payment (LAK)
2017	1,164	558	1,722
2018	7,696	3,030	10,726
2019	7,804	2,952	10,756
2020	5,260	1,992	7,252
2021	1,056	456	1,512
SUM:	**22,980**	**8,988**	**31,968**

SUM of PAYMENT PLAN (Cost in LAK - Amount in Million)

Amount in Green is including the Uniform Cost

No.	Course Level	Course Duration	Acedamic Year	Batch No.	No. of Student	Total Stipend	Total School Fee	Total Cost	SUM Payment Plan for 2017												Total Payment
																		Oct/17	Nov/17	Dec/17	
1	C3	2 Years	2017-18	B1-Y1	600	1,164	558	1,722										726	498	498	1,722
					Total Payment for Year 2017	1,164	558	1,722	-	-	-	-	-	-	-	-	-	726	498	498	1,722

No.	Course Level	Course Duration	Acedamic Year	Batch No.	No. of Student	Total Stipend	Total School Fee	Total Cost	SUM Payment Plan for 2018												Total Payment
									Jan/18	Feb/18	Mar/18	Apr/18	May/18	Jun/18	Jul/18	Aug/18	Sep/18	Oct/18	Nov/18	Dec/18	
1	C1	4 Months	2018	B1	400	1,056	456	1,512	-	484	332	332	364	-	-	-	-	-	-	-	1,512
2	C2	6 Months	2018	B1	300	1,164	468	1,632	-	363	249	249	249	249	273	-	-	-	-	-	1,632
3	C2	10 Months	2018	B1	200	1,272	480	1,752	-	242	166	166	166	166	166	166	166	166	182	-	1,752
4	C3	2 Years	2017-18	B1-Y1	600	2,652	882	3,534	498	498	498	498	498	498	546	-	-	-	-	-	3,534
5	C3	2 Years	2018-19	B1-Y2	600	1,164	558	1,722	-	-	-	-	-	-	-	-	-	726	498	498	1,722
6	C3	2 Years	2018-19	B2-Y1	200	388	186	574	-	-	-	-	-	-	-	-	-	242	166	166	574
					Total Payment for Year 2018	7,696	3,030	10,726	498	1,587	1,245	1,245	1,277	913	985	166	166	1,134	846	664	10,726

No.	Course Level	Course Duration	Acedamic Year	Batch No.	No. of Student	Total Stipend	Total School Fee	Total Cost	SUM Payment Plan for 2019												Total Payment
									Jan/19	Feb/19	Mar/19	Apr/19	May/19	Jun/19	Jul/19	Aug/19	Sep/19	Oct/19	Nov/19	Dec/19	
1	C1	4 Months	2019	B2	400	1,056	456	1,512	-	484	332	332	364	-	-	-	-	-	-	-	1,512
2	C2	6 Months	2019	B2	300	1,164	468	1,632	-	363	249	249	249	249	273	-	-	-	-	-	1,632
3	C2	10 Months	2019	B2	200	1,272	480	1,752	-	242	166	166	166	166	166	166	166	166	182	-	1,752
4	C3	2 Years	2018-19	B1-Y2	600	2,652	882	3,534	498	498	498	498	498	498	546	-	-	-	-	-	3,534
5	C3	2 Years	2018-19	B2-Y1	200	884	294	1,178	166	166	166	166	166	166	182	-	-	-	-	-	1,178
6	C3	2 Years	2019-20	B2-Y2	200	388	186	574	-	-	-	-	-	-	-	-	-	242	166	166	574
7	Dipoma	1 Year	2019-20	B1	200	388	186	574	-	-	-	-	-	-	-	-	-	242	166	166	574
					Total Payment for Year 2019	7,804	2,952	10,756	664	1,753	1,411	1,411	1,443	1,079	1,167	166	166	650	514	332	10,756

No.	Course Level	Course Duration	Acedamic Year	Batch No.	No. of Student	Total Stipend	Total School Fee	Total Cost	SUM Payment Plan for 2020												Total Payment
									Jan/20	Feb/20	Mar/20	Apr/20	May/20	Jun/20	Jul/20	Aug/20	Sep/20	Oct/20	Nov/20	Dec/20	
1	C1	4 Months	2020	B2	400	1,056	456	1,512	-	484	332	332	364	-	-	-	-	-	-	-	1,512
2	C2	6 Months	2020	B2	300	1,164	468	1,632	-	363	249	249	249	249	273	-	-	-	-	-	1,632
3	C2	10 Months	2020	B2	200	1,272	480	1,752	-	242	166	166	166	166	166	166	166	166	182	-	1,752
4	C3	2 Years	2019-20	B2-Y2	200	884	294	1,178	166	166	166	166	166	166	182	-	-	-	-	-	1,178
5	Dipoma	1 Year	2019-20	B1	200	884	294	1,178	166	166	166	166	166	166	182	-	-	-	-	-	1,178
					Total Payment for Year 2020	5,260	1,992	7,252	332	1,421	1,079	1,079	1,111	747	803	166	166	166	182	-	7,252

No.	Course Level	Course Duration	Acedamic Year	Batch No.	No. of Student	Total Stipend	Total School Fee	Total Cost	SUM Payment Plan for 2021												Total Payment
									Jan/21	Feb/21	Mar/21	Apr/21	May/21	Jun/21	Jul/21	Aug/21	Sep/21	Oct/21	Nov/21	Dec/21	
1	C1	4 Months	2021	B2	400	1,056	456	1,512	-	484	332	332	364								1,512
					Total Payment for Year 2021	1,056	456	1,512	-	484	332	332	364								1,512

					Grand Total	22,980	8,988	31,968													31,968

SCHOOL FEE PAYMENT PLAN (Cost in LAK - Amount in Million)

Amount in Green is including the Uniform Cost

No.	Course Level	Course Duration	Acedamic Year	Batch No.	No. of Student	No. of Month	Unit Cost		Total School Fee	School Fee Payment Plan for 2017												Total Payment
							Fee+Dorm.	Uniform												Oct/17	Nov/17	Dec/17	
1	C3	2 Years	2017-18	B1-Y1	600	3	0.210	0.300	558											306	126	126	558
Total Payment for Year 2017									**558**											**306**	**126**	**126**	**558**

No.	Course Level	Course Duration	Acedamic Year	Batch No.	No. of Student	No. of Month	School Fee		Total School Fee	School Fee Payment Plan for 2018												Total Payment
							Fee+Dorm.	Uniform		Jan/18	Feb/18	Mar/18	Apr/18	May/18	Jun/18	Jul/18	Aug/18	Sep/18	Oct/18	Nov/18	Dec/18	
1	C1	4 Months	2018	B1	400	4	0.210	0.300	456		204	84	84	84								456
2	C2	6 Months	2018	B1	300	6	0.210	0.300	468		153	63	63	63	63	63						468
3	C2	10 Months	2018	B1	200	10	0.210	0.300	480		102	42	42	42	42	42	42	42	42	42		480
4	C3	2 Years	2017-18	B1-Y1	600	7	0.210	0.300	882	126	126	126	126	126	126	126						882
5	C3	2 Years	2018-19	B1-Y2	600	3	0.210	0.300	558										306	126	126	558
6	C3	2 Years	2018-19	B2-Y1	200	3	0.210	0.300	186										102	42	42	186
Total Payment for Year 2018									**3,030**	**126**	**585**	**315**	**315**	**315**	**231**	**231**	**42**	**42**	**450**	**210**	**168**	**3,030**

No.	Course Level	Course Duration	Acedamic Year	Batch No.	No. of Student	No. of Month	School Fee		Total School Fee	School Fee Payment Plan for 2019												Total Payment
							Fee+Dorm.	Uniform		Jan/19	Feb/19	Mar/19	Apr/19	May/19	Jun/19	Jul/19	Aug/19	Sep/19	Oct/19	Nov/19	Dec/19	
1	C1	4 Months	2019	B2	400	4	0.210	0.300	456		204	84	84	84								456
2	C2	6 Months	2019	B2	300	6	0.210	0.300	468		153	63	63	63	63	63						468
3	C2	10 Months	2019	B2	200	10	0.210	0.300	480		102	42	42	42	42	42	42	42	42	42		480
4	C3	2 Years	2018-19	B1-Y2	600	7	0.210	0.300	882	126	126	126	126	126	126	126						882
5	C3	2 Years	2018-19	B2-Y1	200	7	0.210	0.300	294	42	42	42	42	42	42	42						294
6	C3	2 Years	2019-20	B2-Y2	200	3	0.210	0.300	186										102	42	42	186
7	Dipoma	1 Year	2019-20	B1	200	3	0.210	0.300	186										102	42	42	186
Total Payment for Year 2019									**2,952**	**168**	**627**	**357**	**357**	**357**	**273**	**273**	**42**	**42**	**246**	**126**	**84**	**2,952**

No.	Course Level	Course Duration	Acedamic Year	Batch No.	No. of Student	No. of Month	School Fee		Total School Fee	School Fee Payment Plan for 2020												Total Payment
							Fee+Dorm.	Uniform		Jan/20	Feb/20	Mar/20	Apr/20	May/20	Jun/20	Jul/20	Aug/20	Sep/20	Oct/20	Nov/20	Dec/20	
1	C1	4 Months	2020	B2	400	4	0.210	0.300	456		204	84	84	84								456
2	C2	6 Months	2020	B2	300	6	0.210	0.300	468		153	63	63	63	63	63						468
3	C2	10 Months	2020	B2	200	10	0.210	0.300	480		102	42	42	42	42	42	42	42	42	42		480
4	C3	2 Years	2019-20	B2-Y2	200	7	0.210	0.300	294	42	42	42	42	42	42	42						294
5	Dipoma	1 Year	2019-20	B1	200	7	0.210	0.300	294	42	42	42	42	42	42	42						294
Total Payment for Year 2020									**1,992**	**84**	**543**	**273**	**273**	**273**	**189**	**189**	**42**	**42**	**42**	**42**	**-**	**1,992**

No.	Course Level	Course Duration	Acedamic Year	Batch No.	No. of Student	No. of Month	School Fee		Total School Fee	School Fee Payment Plan for 2021												Total Payment
							Fee+Dorm.	Uniform		Jan/21	Feb/21	Mar/21	Apr/21	May/21	Jun/21	Jul/21	Aug/21	Sep/21	Oct/21	Nov/21	Dec/21	
1	C1	4 Months	2021	B2	400	4	0.210	0.300	456		204	84	84	84								456
Total Payment for Year 2021									**456**	**-**	**204**	**84**	**84**	**84**	**-**	**-**	**-**	**-**	**-**	**-**	**-**	**456**

Grand Total for Stipend									**8,988**	**378**	**1,959**	**1,029**	**1,029**	**1,029**	**693**	**693**	**126**	**126**	**1,044**	**504**	**378**	**8,988**

STIPEND PAYMENT PLAN (Cost in LAK - Amount in Million)

Amount in Green is the SUM Amount for the Circle

No.	Course Level	Course Duration	Acedamic Year	Batch No.	No. of Student	No. of Month	Cost of Stipend		Total Stipend Budget	Stipend Payment Plan for 2017													1st Trans.	Oct/17	Nov/17	2nd Trans.	Dec/17	Total Payment
							Monthly Allowance	Travel Cost																				
1	C3	2 Years	2017-18	B1-Y1	600	3	0.620	0.080	1,164														792	420	372	744	372	1,164
Total Payment for Year 2017									**1,164**														**792**	**420**	**372**	**744**	**372**	**1,164**

No.	Course Level	Course Duration	Acedamic Year	Batch No.	No. of Student	No. of Month	Cost of Stipend		Total Stipend Budget	Stipend Payment Plan for 2018														5th Trans.	Oct/18	Nov/18	6th Trans.	Dec/18	Total Payment
							Monthly Allowance	Travel Cost		Jan/18	1st Trans.	Feb/18	Mar/18	2nd Trans.	Apr/18	May/18	3rd Trans.	Jun/18	Jul/18	4th Trans.	Aug/18	Sep/18						
1	C1	4 Months	2018	B1	400	4	0.620	0.080	1,056		528	280	248	528	248	280	-			-			-			-		1,056
2	C2	6 Months	2018	B1	300	6	0.620	0.080	1,164		396	210	186	372	186	186	396	186	210	-			-			-		1,164
3	C2	10 Months	2018	B1	200	10	0.620	0.080	1,272		264	140	124	248	124	124	248	124	124	248	124	124	264	124	140	-		1,272
4	C3	2 Years	2017-18	B1-Y1	600	7	0.620	0.080	2,652	372	744	372	372	744	372	372	792	372	420	-			-					2,652
5	C3	2 Years	2018-19	B1-Y2	600	3	0.620	0.080	1,164		-			-			-			-			792	420	372	744	372	1,164
6	C3	2 Years	2018-19	B2-Y1	200	3	0.620	0.080	388		-			-			-			-			264	140	124	248	124	388
Total Payment for Year 2018									**7,696**	**372**	**1,932**	**1,002**	**930**	**1,892**	**930**	**962**	**1,436**	**682**	**754**	**248**	**124**	**124**	**1,320**	**684**	**636**	**992**	**496**	**7,696**

